Australian Government
Department of Foreign Affairs and Trade

# ເອກະສານອອກແບບແຜນງານບີຄວາໄລຍະທີ 2 ສະບັບສັງລວມ

ຊື່ແຜນງານ: ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສໍາລັບການສຶກສາຂັ້ນພື້ນຖານໃນ ສປປ ລາວ ໄລຍະທີ 2 (ບີຄວາ 2)

| | |
|---|---|
| ວັນທີເລີ່ມແຜນງານ: 1 ກໍລະກົດ 2022 | ວັນທີສິ້ນສຸດແຜນງານ: 30 ມິຖຸນາ 2026 |
| ເງິນທຶນຈາກລັດຖະບານອົດສະຕຣາລີທີ່ສະເໜີ: ສູງສຸດຮອດ 28 ລ້ານດອນລາອົດສະຕຣາລີ | ເງິນທຶນສົມທົບຈາກຜູ້ໃຫ້ທຶນອື່ນທີ່ສະເໜີ: ຍັງບໍ່ທັນຢັ້ງຢືນເປັນທາງການ |

## A. ພາກສະເໜີ

ສປປ ລາວ ພວມປະເຊີນໜ້າກັບບັນຫາຜົນການຮຽນຂອງນັກຮຽນໃນຊັ້ນປະຖົມ ທີ່ຕໍ່າ ແລະ ຕໍ່ເນື່ອງຢ່າງໜ້າເປັນຫ່ວງ. ການປັບປຸງຜົນການຮຽນຂອງນັກຮຽນໃນຊັ້ນປະຖົມມີຄວາມຈໍາເປັນຢ່າງຍິ່ງ ເຊິ່ງເປັນພື້ນຖານສໍາລັບການບັນລຸລະດັບການສຶກສາທີ່ຈໍາເປັນສໍາລັບການພັດທະນາແຮງງານທີ່ມີທັກສະ, ແລະ ນອກນັ້ນກໍ່ຈໍາເປັນສໍາລັບການເປັນຢູ່ທີ່ດີຂອງສັງຄົມໂດຍລວມ, ເຊິ່ງທັງສອງຢ່າງນີ້ແມ່ນການປະກອບສ່ວນສໍາຄັນສໍາລັບການບັນລຸເປົ້າໝາຍການພັດທະນາເສດຖະກິດສັງຄົມແຫ່ງຊາດ.

ບຸລິມະສິດທໍາອິດຂອງເປົ້າໝາຍທາງດ້ານນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາແລະກິລາຂອງສປປລາວ (ESSDP) 2021-25 ແມ່ນ '*ການສຸມໃສ່ບຸລິມະສິດຂອງຂະແໜງການໃນການສຶກສາຊັ້ນປະຖົມເພື່ອປັບປຸງຄວາມຮູ້ລາຍວິຊາແລະທັກສະການສອນຂອງຄູໃນຊັ້ນປະຖົມ*' ເຊິ່ງເປັນວິທີການໃນການປັບປຸງຜົນການຮຽນ. ເຖິງຢ່າງໃດກໍ່ຕາມ, ໃນຂະນະທີ່ແຜນດັ່ງກ່າວວາງບຸລິມະສິດສູງໃສ່ການປັບປຸງຄຸນນະພາບການສຶກສາຂັ້ນພື້ນຖານ, ແຕ່ລະບົບການສຶກສາກໍາລັງປະເຊີນກັບອຸປະສັກທາງດ້ານການເງິນທີ່ຮຸນແຮງ. ນອກນັ້ນ, ຄວາມສາມາດຂອງຊັບພະຍາກອນມະນຸດ ແລະ ຂອງສະຖາບັນກໍ່ມີຈໍາກັດ, ມີຄວາມແຕກໂຕນໃນຫຼາຍມິຕິລວມທັງເສດຖະກິດ-ສັງຄົມ, ບົດບາດຍິງ-ຊາຍ, ແລະ ຊົນຊາດຊົນເຜົ່າ. ນອກຈາກນັ້ນ, ການລະບາດຂອງພະຍາດໂຄວິດ-19 ກໍ່ເຮັດໃຫ້ບັນຫາທ້າທາຍຂອງການພັດທະນາຍິ່ງຮ້າຍແຮງໄປກວ່າເກົ່າ, ລວມທັງການເພີ່ມຄວາມແຕກໂຕນ ແລະ ຄວາມຫຍຸ້ງຍາກທີ່ປະເຊີນໂດຍກຸ່ມທີ່ດ້ອຍໂອກາດຢູ່ແລ້ວໃຫ້ສູງຂຶ້ນ. ຜົນກະທົບທາງດ້ານເສດຖະກິດ ແລະ ສັງຄົມດັ່ງກ່າວນີ້ເຮັດໃຫ້ມີຄວາມກົດດັນເພີ່ມຂຶ້ນຕໍ່ການເງິນຂອງລັດຖະບານ ເຊິ່ງເປັນໄປໄດ້ສູງທີ່ຈະຍິ່ງເປັນອຸປະສັກຕໍ່ການສະໜອງງົບປະມານໃຫ້ແກ່ຂະແໜງການສຶກສາ, ເຊິ່ງກໍ່ຈະມີຜົນກະທົບຕໍ່ການຂຶ້ນຫ້ອງຮຽນຂອງນັກຮຽນ ແລະ ຄູ.

ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດການເຂົ້າຮຽນສໍາລັບການສຶກສາຂັ້ນພື້ນຖານໃນ ສປປລາວ (ບີຄວາ) ໄລຍະທີ 2 ມີເປົ້າໝາຍໃນການສະໜັບສະໜູນລັດຖະບານລາວໃນການຕອບໂຕ້ກັບບັນຫາຜົນການຮຽນຕໍ່າ. ເປົ້າໝາຍຂອງແຜນງານແມ່ນ "*ເດັກຍິງແລະເດັກຊາຍ ໃນເກນອາຍຸເຂົ້າຮຽນຊັ້ນປະຖົມ ໂດຍສະເພາະເດັກທີ່ດ້ອຍໂອກາດ ມີຜົນການຮຽນທີ່ດີຂຶ້ນ*". ເພື່ອບັນລຸເປົ້າໝາຍດັ່ງກ່າວ, ແຜນງານຈະສະໜັບສະໜູນການປັບປຸງການສອນ, ເພື່ອອໍານວຍຄວາມສະດວກໃຫ້ແກ່ການຮຽນຂອງເດັກໃນຊັ້ນປະຖົມ ທີ່ເປັນການຮຽນຮ່ວມ.

ບີຄວາແມ່ນແຜນງານໃຫຍ່ຂອງອົດສະຕຣາລີທີ່ສະໜັບສະໜູນການສຶກສາໃນ ສປປ ລາວ. ໄລຍະທໍາອິດຂອງແຜນງານແມ່ນກວມເອົາໄລຍະເວລາ ແຕ່ປີ 2015-2022 ແລະ ໄດ້ສຸມໃສ່ການສະໜັບສະໜູນລັດຖະບານລາວໃນການປັບປຸງຫຼັກສູດຊັ້ນປະຖົມສຶກສາ. ໄລຍະທີ 2 ຂອງແຜນງານກໍ່ຄືບີຄວາ 2, ຈະກວມເອົາໄລຍະເວລາ ແຕ່ເດືອນກໍລະກົດ 2022 ຫາ ເດືອນມິຖຸນາ 2026 ແລະ ອາດຈະຕໍ່ໄລຍະເວລາອອກໄປອີກ 4 ປີ ຫຼັງຈາກນັ້ນແລະຈະສືບຕໍ່ຜົນສໍາເລັດຫຼືຄວາມຄືບໜ້າທີ່ໄດ້ບັນລຸໃນໄລຍະທີ 1, ໃນການສະໜັບສະໜູນກະຊວງສຶກສາທິການ ແລະ ກິລາ (ສສກ) ເພື່ອສໍາເລັດການຈັດຕັ້ງປະຕິບັດຫຼັກສູດຄົບ 5 ປີ ຂອງຊັ້ນປະຖົມ ໃນທົ່ວປະເທດ. ໃນເມື່ອຫຼັກສູດຖືກນໍາໃຊ້ໃນໂຮງຮຽນແລ້ວ, ແຜນງານຈະຄ່ອຍໆຫັນການສຸມໃສ່ໄປສູ່ການສະໜັບສະໜູນທາງດ້ານນະໂຍບາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບພັດທະນາວິຊາຊີບຄູ.

ສິ່ງດັ່ງກ່າວນີ້ຈະເຮັດໃຫ້ຄ່ອຍໆມີການຫັນປ່ຽນຈາກວິທີການສະໜັບສະໜູນທີ່ສະໜອງການບໍລິການໂດຍກົງໄປສູ່ວິທີການທີ່ຊ່ວຍປະຕິຮູບລະບົບທີ່ມີເປົ້າໝາຍໃນການເພີ່ມຄວາມເປັນເຈົ້າການໃຫ້ແກ່ລັດຖະ ບານ ແລະ ສົ່ງເສີມຄວາມຍືນຍົງຂອງວຽກງານ.
ເນື່ອງຈາກວ່າແຜນງານໄດ້ພັດທະນາວິທີການທີ່ເນັ້ນໜັກການສະໜັບສະໜູນທາງດ້ານນະໂຍບາຍ ແລະ ການປັບປຸງລະບົບຫຼາຍຂຶ້ນ, ແຜນງານຈະພະຍາຍາມໃຊ້ຂໍ້ມູນຫຼັກຖານ ແລະ ຄວາມຮູ້ທີ່ໄດ້ຈາກການເຮັດວຽກໃນລະດັບວິຊາການຮ່ວມກັບຂັ້ນເມືອງ
ເພື່ອເປັນປະໂຫຍດໃນການເພີ່ມລະດັບການຈັດຕັ້ງປະຕິບັດວິທີການທີ່ໄດ້ຮັບຜົນສຳເລັດສູງ
ໂດຍຜ່ານຂະບວນການຫັນຄວາມຮູ້ໄປສູ່ນະໂຍບາຍ ແລະ ໄປສູ່ການຈັດຕັ້ງປະຕິບັດ.

ໂດຍຜ່ານບົດບາດການເປັນປະທານຮ່ວມຂອງໜ່ວຍງານວິຊາການຂະແໜງການສຶກສາ, ສະຖານທູດອົດສະຕຣາລີຈະສືບຕໍ່ບົດບາດການເປັນຜູ້ນຳໃນການປຶກສາຫາລືທາງດ້ານນະໂຍບາຍຮ່ວມກັບລັດຖະບານລາວກ່ຽວກັບບັນຫາທ້າທາຍໃນການປະຕິຮູບຕ່າງໆ,ລວມທັງບັນຫາການເງິນຂອງຂະແໜງການ,ບັນຫາຄວາມເທົ່າທຽມແລະຄວາມສະເໝີພາບ ທີ່ກ່ຽວຂ້ອງກັບການລົງທຶນໃສ່ຂະແໜງການສຶກສາຂອງພວກເຮົາ.

ການປະສົບຜົນສຳເລັດໃນການລົງທຶນຈະຢັ້ງຢືນຄືນຄວາມໝາຍໝັ້ນ ແລະ ການບັບໂຕຂອງອົດສະຕຣາລີໃນການເປັນທາງເລືອກຄູ່ຮ່ວມພັດທະນາໃນຂະແໜງການສຶກສາ. ນອກນັ້ນ, ສິ່ງດັ່ງກ່າວຍັງຈະຊ່ວຍສົ່ງເສີມຄວາມເປັນເຈົ້າການຂອງລັດຖະບານລາວຕໍ່ການປະຕິຮູບການພັດທະນາຄູທີ່ສຳຄັນ, ຄຽງຄູ່ກັບການປະຕິຮູບອື່ນໆ ທີ່ໄດ້ຮັບການສົມທົບສະໜັບສະໜູນຈາກການລົງທຶນຂອງອົດສະຕຣາລີ (ເຊັ່ນການວາງແຜນງົບປະມານ ແລະ ການລາຍງານການໃຊ້ຈ່າຍ). ການຮ່ວມມືລະຫວ່າງອົດສະຕຣາລີ ແລະ ສປປ ລາວ ເຊັ່ນນີ້ຈະຊ່ວຍປັບປຸງຄຸນນະພາບການສຶກສາຊັ້ນປະຖົມ ໃນ ສປປ ລາວ, ສ້າງຄວາມເທົ່າທຽມໃຫ້ແກ່ໂຮງຮຽນດ້ອຍໂອກາດທີ່ເປັນໂຮງຮຽນເປົ້າໝາຍ, ແລະ ປະກອບສ່ວນເຂົ້າໃນການປັບປຸງຜົນການຮຽນຂອງນັກຮຽນໃນໄລຍະຍາວ.

## B. ຫຼັກເຫດ ແລະ ຜົນ ຂອງແຜນງານ

ເປົ້າໝາຍຂອງແຜນງານແມ່ນ "***ເດັກຍິງ ແລະ ເດັກຊາຍ ໃນເກນອາຍຸເຂົ້າຮຽນຊັ້ນປະຖົມ ໂດຍສະເພາະເດັກທີ່ດ້ອຍໂອກາດ ມີຜົນການຮຽນທີ່ດີຂຶ້ນ***". ເປົ້າໝາຍດັ່ງກ່າວແມ່ນເປັນການຕອບຮັບ, ແລະ ປະກອບສ່ວນເຂົ້າໃນການບັນລຸຈຸດປະສົງຂອງແຜນຕອບໂຕ້ພະຍາດໂຄວິດ-19 ທາງດ້ານການພັດທະນາສຳລັບສປປລາວຂອງອົດສະຕຣາລີ[1], ບຸລິມະສິດການສຶກສາຂອງລັດຖະບານລາວ[2] ແລະ ເປົ້າໝາຍການພັດທະນາແບບຍືນຍົງສຳລັບການສຶກສາ. ເພື່ອບັນລຸເປົ້າໝາຍດັ່ງກ່າວ, ແຜນງານຈະສະໜັບສະໜູນການບັນລຸຜົນໄດ້ຮັບໄລຍະຍາວໃນຕອນທ້າຍຂອງແຜນງານອັນດຽວຄືການປັບປຸງການສອນ, ເພື່ອອຳນວຍຄວາມສະດວກໃຫ້ແກ່ການຮຽນຂອງເດັກໃນຊັ້ນປະຖົມ ທີ່ເປັນການຮຽນຮ່ວມ.

**ພາບສະແດງທີ 1: ຫຼັກເຫດ ແລະ ຜົນ ຂອງແຜນງານບີຄວາໄລຍະທີ 2**

[1] *ແຜນຕອບໂຕ້ພະຍາດໂຄວິດ-19 ທາງດ້ານການພັດທະນາ ສຳລັບ ສປປ ລາວ* (CDRP). ລັດຖະບານອົດສະຕຣາລີ, ເດືອນຕຸລາ 2020.

[2] ໄດ້ລະບຸໄວ້ໃນ *ແຜນພັດທະນາຂະແໜງການສຶກສາ ແລະ ກິລາ* 2021-25 ຂອງກະຊວງສຶກສາທິການ ແລະ ກິລາ.

**ເປົ້າໝາຍ: ການປັບປຸງການຮຽນ**

ເດັກຍິງ ແລະ ເດັກຊາຍ ໃນເກນອາຍຸເຂົ້າຮຽນຊັ້ນປະຖົມ ໂດຍສະເພາະເດັກທີ່ດ້ອຍໂອກາດ ມີຜົນການຮຽນທີ່ດີຂຶ້ນ

**ຜົນໄດ້ຮັບໄລຍະຍາວໃນຕອນທ້າຍຂອງແຜນງານ (EOPO): ການປັບປຸງການສອນ**

ຄູໃຫ້ການອຳນວຍຄວາມສະດວກ ແກ່ການຮຽນຂອງເດັກທຸກຄົນໃນຊັ້ນປະຖົມໄດ້ດີຂຶ້ນ

**ຜົນໄດ້ຮັບໄລຍະກາງ ທີ 1 (IO 1)**

**ຫຼັກສູດຊັ້ນປະຖົມສຶກສາ ແລະ ສື່ການຮຽນການສອນ**

ເນື້ອໃນ ແລະ ວິທີການສອນ ລວມທັງການຮຽນຮ່ວມ ໄດ້ຮັບການປັບປຸງ ແລະ ນຳໃຊ້ໃນໂຮງຮຽນ

- ການພັດທະນາ ແລະ ຈັດຕັ້ງປະຕິບັດຫຼັກສູດ ຮອດຂັ້ນ ປ.5
- ການຄຸ້ມຄອງຫຼັກສູດ
- ການປະເມີນຜົນການຮຽນຂອງນັກຮຽນ
- ການເວົ້າພາສາລາວ

**ຜົນໄດ້ຮັບໄລຍະກາງ ທີ 2 (IO 2)**

**ການພັດທະນາວິຊາຊີບຄູ**

ຄວາມຮູ້ ແລະ ທັກສະຂອງຄູສອນຊັ້ນປະຖົມໄດ້ຮັບການປັບປຸງ

- ນະໂຍບາຍກ່ຽວກັບການພັດທະນາວິຊາຊີບຄູ
- ຄວາມສາມາດ ແລະ ການຈັດຕັ້ງປະຕິບັດການຝຶກອົບຮົມຄູປະຈຳ ຂອງວິທະຍາໄລຄູ
- ການຈັດຕັ້ງປະຕິບັດລະບົບພັດທະນາວິຊາຊີບບຕໍ່ເນື່ອງໂດຍອີງໃສ່ໂຮງຮຽນເປັນຫຼັກ

**ຜົນໄດ້ຮັບໄລຍະກາງ ທີ 3 (IO 3)**

**ການຄຸ້ມຄອງ ແລະ ການສະໜັບສະໜູນຄູ**

ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ເພື່ອສະໜັບສະໜູນການສອນໃນຊັ້ນປະຖົມ

- ການນຳພາທາງດ້ານການສອນ ແລະ ການຮຽນໃນຂັ້ນໂຮງຮຽນ
- ການສະໜັບສະໜູນຈາກຂັ້ນເມືອງຕໍ່ການສອນ ແລະ ການຮຽນ
- ນະໂຍບາຍການຄຸ້ມຄອງຄູ

**ກິດຈະກຳອື່ນໆເພື່ອເອື້ອອຳນວຍແຜນງານ**

- ຍຸດທະສາດການຕິດຕາມ, ປະເມີນຜົນ ແລະ ການຖອດຖອນບົດຮຽນ
- ຍຸດທະສາດກ່ຽວກັບບົດບາດຍິງ-ຊາຍ ແລະ ການສຶກສາຮຽນຮ່ວມ
- ຍຸດທະສາດກ່ຽວກັບພະຍາດໂຄວິດ-19

ຜົນໄດ້ຮັບໄລຍະກາງ 3 ອັນທີ່ກ່ຽວພັນກັນ (ທີ່ອາດຈະພິຈາລະນາວ່າເປັນອົງປະກອບ) ຈະຮ່ວມກັນປະກອບສ່ວນເຂົ້າໃສ່ການປັບປຸງການສອນ.
ທັງສາມຜົນໄດ້ຮັບໄລຍະກາງນີ້ຈະເນັ້ນໃສ່ການສຳເລັດການປັບປຸງຫຼັກສູດເຊິ່ງເປັນພື້ນຖານໃຫ້ແກ່ການປັບປຸງການຮຽນ (IO1), ການປັບປຸງຄວາມຮູ້ແລະ ທັກສະຂອງຄູໂດຍຜ່ານການສ້າງຄວາມເຂັ້ມແຂງລະບົບພັດທະນາວິຊາຊີບຄູ (IO2), ແລະ ສ້າງຄວາມເຂັ້ມແຂງລະບົບສະໜັບສະໜູນຄູ (IO3).

## c. ງົບປະມານ ແລະ ຊັບພະຍາກອນຕ່າງໆ

ງົບປະມານຂອງປີຄວາ 2 ແມ່ນສູງສຸດຮອດ 28 ລ້ານດອນລາອົດສະຕຣາລີ, ກວມໄລຍະເວລາແຕ່ວັນທີ 1 ກໍລະກົດ 2022 ຫາ 30 ມິຖຸນາ 2026, ໂດຍມີງົບປະມານປະຈຳປີສະເລ່ຍ 7 ລ້ານໂດລາອົດສະຕຣາລີ. ງົບປະມານນີ້ແມ່ນຫຼຸດລົງຫຼາຍຈາກງົບປະມານແຜນງານປະມານ 80 ລ້ານໂດລາອົດສະຕຣາລີ ສຳລັບ 7 ປີ ຂອງແຜນງານໄລຍະທີ 1. ການຫຼຸດລົງຂອງງົບປະມານນີ້ ແມ່ນເປັນຜົນມາຈາກການຫຼຸດລົງຂອງງົບປະມານຂອງລັດຖະບານອົດສະຕຣາລີ ແລະ ການຫຼຸດລົງໃນການສົມທົບທຶນຈາກຄູ່ຮ່ວມພັດທະນາອື່ນ[3].

ການກະຕວງງົບປະມານເບື້ອງຕົ້ນສຳລັບອົງປະກອບທັງສາມຂອງແຜນງານ (IOs), ໂດຍມີການຄາດຄະເນລາຍລະອຽດຂອງກິດຈະກຳ ແລະ ຄ່າໃຊ້ຈ່າຍການຄຸ້ມຄອງແຜນງານ, ຖືກສະເໜີໃນພາບສະແດງທີ 2 ລຸ່ມນີ້. ຄວນຍໍ້າຄືນຕື່ມອີກວ່າ, ການຈັດສັນງົບປະມານຂອງແຕ່ລະອົງປະກອບອາດຈະຖືກດັດປັບກ່ອນການເລີ່ມຕົ້ນຈັດຕັ້ງປະຕິບັດແຜນງານ.

[3] ສະຫະພາບເອີຣົບ ແລະ ອົງການພັດທະນາສາກົນຂອງປະເທດສະຫະລັດອາເມລິກາ ໄດ້ສົມທົບທຶນເຂົ້າໃນແຜນງານໄລຍະທີ 1. ອົງການພັດທະນາສາກົນຂອງປະເທດສະຫະລັດອາເມລິກາອາດຈະສົມທົບທຶນຕື່ມອີກສຳລັບໄລຍະທີ 2.

ພາບສະແດງທີ 2: ງົບປະມານກະຕວງສໍາລັບບີຄວາ 2 ແຕ່ປີ 2022/23 ຫາ 2025/26 (ດອນລາອົດສະຕຣາລີ)

| | 2022/23 | 2023/24 | 2024/25 | 2025/26 | ລວມ |
|---|---|---|---|---|---|
| IO1: ຫຼັກສູດຊັ້ນປະຖົມສຶກສາ ແລະ ສື່ການຮຽນການສອນ | 2,750,000 | 1,950,000 | 450,000 | 450,000 | **5,600,000** |
| IO2: ການພັດທະນາວິຊາຊີບຄູ | 1,200,000 | 1,400,000 | 1,650,000 | 1,650,000 | **5,900,000** |
| IO3: ການຄຸ້ມຄອງ ແລະ ການສະໜັບສະໜູນຄູ | 850,000 | 950,000 | 1,150,000 | 1,150,000 | **4,100,000** |
| ກິດຈະກໍາອື່ນໆເພື່ອເອື້ອອໍານວຍແຜນງານ (ລວມທັງ ການຕິດຕາມ ແລະ ປະເມີນຜົນ, ວຽກງານຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະ ສັງຄົມ, ພະຍາດໂຄວິດ-19) | 710,000 | 710,000 | 710,000 | 710,000 | **2,840,000** |
| ການຄຸ້ມຄອງແຜນງານ (ລວມທັງ ທີມງານຫຼັກ ແລະ ຊ່ຽວຊານ) | 2,090,000 | 2,090,000 | 2,090,000 | 2,090,000 | **8,360,000** |
| ການຄຸ້ມຄອງແຜນງານຈາກສະຖານທູດອົດສະຕຣາລີ (ລວມທັງການປະເມີນກາງສະໄໝ, ໜ່ວຍງານວິຊາການຂະແໜງ ການສຶກສາ ແລະ ກຸ່ມຊ່ຽວຊານໃຫ້ຄໍາແນະນໍາທາງດ້ານວິຊາການ) | 250,000 | 250,000 | 450,000 | 250,000 | **1,200,000** |
| ລວມຍອດ | **7,850,000** | **7,350,000** | **6,500,000** | **6,300,000** | **28,000,000** |

ສໍາລັບງົບປະມານແບ່ງຕາມອົງປະກອບ, ໂດຍມີການຈັດສັນງົບປະມານຫຼາຍເຂົ້າໃນ IO1 ໃນປີທໍາອິດ, ແລະ ມີການຈັດສັນງົບປະມານເພີ່ມເຂົ້າໃນອົງປະກອບ IO2 ແລະ IO3 ເລີ່ມຈາກປີທີ 2, ເຊິ່ງເປັນການສະແດງໃຫ້ເຫັນການຫັນປ່ຽນຈາກການປັບປຸງຫຼັກສູດຊັ້ນປະຖົມສຶກສາ ໄປສູ່ວຽກງານທີ່ກວ້າງຂຶ້ນກ່ຽວກັບຄຸນນະພາບຂອງການສອນ. ແຜນງານຈະຍັງຄົງຮັກສາຄວາມສາມາດໃນການດັດປັບແຜນແລະງົບປະມານເພື່ອໃຫ້ສາມາດຂະຫຍາຍລະດັບການຈັດຕັ້ງປະຕິບັດກິດຈະກໍາໃຫ້ກວ້າງອອກໃນກໍລະນີທີ່ມີເງິນທຶນເພີ່ມຂຶ້ນ, ຫຼື ຫຼຸດລະດັບການຈັດຕັ້ງປະຕິບັດໃຫ້ແຄບລົງໃນກໍລະນີທີ່ງົບປະມານຫຼຸດລົງ.
ການນໍາໃຊ້ກຸ່ມຊ່ຽວຊານໃຫ້ຄໍາແນະນໍາທາງດ້ານວິຊາການ (TAG) ເລື້ອຍໆ, ການປະເມີນກາງສະໄໝ ຂອງແຜນງານ ແລະ ການມີສ່ວນຮ່ວມໃນໜ່ວຍງານວິຊາການຂະແໜງການສຶກສາຢ່າງຕໍ່ເນື່ອງ ໄດ້ຖືກຄິດໄລ່ງົບປະມານໄວ້ແລ້ວ ເຊິ່ງກິດຈະກໍາເຫຼົ່ານີ້ແມ່ນກົນໄກສະໜັບສະໜູນການຄຸ້ມຄອງຢ່າງມີຍຸດທະສາດຂອງແຜນງານບີຄວາ 2.

## D. ວິທີການ ແລະ ກິດຈະກໍາຫຼັກ

ບີຄວາ 2 ຈະສືບຕໍ່ວຽກງານທີ່ມີຄວາມຄືບໜ້າ ແລະ ຜົນສໍາເລັດມາຈາກໄລຍະທີ 1, ເຊິ່ງຈະມີການເພີ່ມຂຶ້ນໃນບາງດ້ານແລະ ມີການຫັນປ່ຽນທີ່ຈະແຈ້ງຈາກການສຸມໃສ່ການປັບປຸງຫຼັກສູດຊັ້ນປະຖົມສຶກສາເປັນຫຼັກ ໄປສູ່ວຽກງານທີ່ກວ້າງຂຶ້ນກ່ຽວກັບຄຸນນະພາບຂອງການສອນ ແລະ ສຸມໃສ່ການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບພັດທະນາວິຊາຊີບຄູ.

### 1. ຫຼັກສູດຊັ້ນປະຖົມສຶກສາ ແລະ ສື່ການຮຽນການສອນ (IO1)

ບີຄວາ 2 ຈະສືບຕໍ່ສະໜັບສະໜູນການຈັດຕັ້ງປະຕິບັດກິດຈະກໍາຫຼັກຂອງແຜນງານໄລຍະທີ 1 ລວມທັງ ***ການຈັດຕັ້ງປະຕິບັດຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດສໍາລັບ ປ.4 ແລະ ປ.5*** ໃນ 3 ວິຊາ (ພາສາລາວ, ວິທະຍາສາດ ແລະ ສິ່ງແວດລ້ອມ, ແລະ ພາສາອັງກິດ) ໃຫ້ສໍາເລັດ, ໂດຍຜ່ານການພັດທະນາ ແລະ ຜະລິດສື່ການຮຽນການສອນ, ແລະ ການຝຶກອົບຮົມຄູທຸກຄົນ ແລະ ຄູສຶກສານິເທດທົ່ວປະເທດໃນການນໍາໃຊ້ຫຼັກສູດສະບັບປັບປຸງໃໝ່. ຈາກມຸມມອງຂອງການສຶກສາ ມັນມີຄວາມຈໍາເປັນທີ່ຕ້ອງໄດ້ຮັບປະກັນຄວາມຕໍ່ເນື່ອງທາງດ້ານເນື້ອໃນ ແລະ ວິທີການສອນໄປຮອດຂັ້ນ ປ.4 ແລະ ປ.5 ເພື່ອໃຫ້ນັກຮຽນສາມາດຮຽນຈົບການສຶກສາຊັ້ນປະຖົມທີ່ນໍາໃຊ້ວິທີການຮຽນການສອນທີ່ສອດຄ່ອງກັນ. ເຫດຜົນທາງດ້ານວິຊາການສໍາລັບກິດຈະກໍາເຫຼົ່ານີ້, ແລະ ວິທີການທີ່ເຈາະຈົງ, ຈະຍັງຄົງສືບຕໍ່ໃນຮູບແບບເດີມ

ເຖິງແມ່ນວ່າອາດຈະມີການປ່ຽນແປງອີງຕາມການຕິດຕາມ, ປະເມີນຜົນ, ການຖອດຖອນບົດຮຽນ ແລະ ການປັບປ່ຽນຕາມຄວາມຈຳເປັນ.

ບົດວາ 2 ຈະສະໜັບສະໜູນ ສສກ ໃນການຈັດຕັ້ງປະຕິບັດ ***ການປະເມີນຜົນການຮຽນຂອງນັກຮຽນ***(ASLO[4]) ໃນປີ 2023 ຫຼື 2024. ຄາດວ່າຈະໃຫ້ການສະໜັບສະໜູນການປະເມີນຜົນການຮຽນຂອງນັກຮຽນຂັ້ນ ປ.3 ດັ່ງທີ່ໄດ້ສ້າງມາດຖານໄວ້ໃນໄລຍະທີ 1 ໃນປີ 2017. ນອກນັ້ນ ຍັງຄາດວ່າ ສປປ ລາວ ຈະມີສ່ວນຮ່ວມໃນຮອບວຽນການປະເມີນການຮຽນຂອງນັກຮຽນຂັ້ນ ປ.5 ຂອງອາຊີຕາເວັນອອກສຽງໃຕ້ (SEA-PLM) ໃນປີ 2023 ເຊິ່ງເປັນການປະເມີນທີ່ສືບຕໍ່ຈາກທີ່ໄດ້ປະເມີນ ໃນປີ 2019 (ທີ່ໄດ້ຮັບການສະໜັບສະໜູນຈາກອົງການຢູນິເຊັບ). ການປະເມີນເຫຼົ່ານີ້ຈະເຮັດໃຫ້ສາມາດສົມທຽບທ່າອຽງຂອງຜົນການຮຽນໃນຂັ້ນຮຽນທີ່ປະເມີນ. ການສະໜັບສະໜູນການປະເມີນຜົນການຮຽນຂອງນັກຮຽນໃນປະມານປີ 2028 ເຊິ່ງແມ່ນໃນໄລຍະທີ່ອາດຈະຕໍ່ເວລາອອກໄປຂອງໄລຍະທີ 2 ແມ່ນທາງເລືອກທີ່ເປັນໄປໄດ້. ສສກ ຈະໄດ້ຮັບການສະໜັບສະໜູນທາງດ້ານວິຊາການ ເພື່ອສ້າງຂີດຄວາມສາມາດໃນການອອກແບບ, ຈັດຕັ້ງປະຕິບັດ ແລະ ເຮັດໃຫ້ການປະເມີນຜົນການຮຽນຂອງນັກຮຽນເປັນລະບົບທີ່ຈັດຕັ້ງປະຕິບັດເປັນປົກກະຕິ, ເຊິ່ງເປັນພື້ນຖານໃຫ້ແກ່ການວັດຜົນການຮຽນຂອງນັກຮຽນຢ່າງຕໍ່ເນື່ອງ. ສິ່ງທີ່ສຳຄັນກໍ່ຄື, ການປະເມີນຜົນການຮຽນຂອງນັກຮຽນຈະກາຍເປັນເຄື່ອງມືຫຼັກໃນການວັດຜົນການຈັດຕັ້ງປະຕິບັດແຜນງານບົດວາໃນລະດັບເປົ້າໝາຍ ແລະ ຜົນໄດ້ຮັບໄລຍະຍາວ.

ການພັດທະນາວິທີການ ແລະ ເຄື່ອງມືຂອງ ***ການປະເມີນເພື່ອປັບປຸງການສອນ ແລະ ການປະເມີນຜົນການຮຽນ***[5] ຈະເປັນການສະໜັບສະໜູນທີ່ເປັນສ່ວນໜຶ່ງຂອງການພັດທະນາຫຼັກສູດ. ຄຳແນະນຳ ແລະ ເຄື່ອງມື (ເຊັ່ນ ການໃຫ້ຄະແນນແບບໃຊ້ເກນການປະເມີນ) ໄດ້ຖືກເຊື່ອມສານເຂົ້າໃນສື່ການຮຽນການສອນຂອງຫຼັກສູດ, ລວມທັງຄູ່ມືຄູ ແລະ ຊຸດອຸປະກອນຄູ. ວິທີການປະເມີນນັກຮຽນຈະຖືກລວມເຂົ້າໃນກິດຈະກຳການພັດທະນາວິຊາຊີບຄູທີ່ສະໜັບສະໜູນພາຍໃຕ້ IO2.

ໂຄງການທົດລອງຝຶກເວົ້າພາສາລາວແມ່ນໂຄງການໃນໄລຍະທີ 1 ກ່ຽວກັບການຮຽນພາສາລາວສຳລັບເດັກທີ່ເລີ່ມເຂົ້າຮຽນຊັ້ນປະຖົມໂດຍທີ່ຍັງບໍ່ສາມາດເວົ້າພາສາລາວໄດ້ (ມີປະມານ 40% ຂອງເດັກທີ່ບໍ່ໄດ້ໃຊ້ພາສາລາວເປັນພາສາແມ່). ຈຸດປະສົງຫຼັກຂອງການທົດລອງແມ່ນ a) ປັບປຸງຜົນການຮຽນຂອງນັກຮຽນທີ່ບໍ່ໄດ້ໃຊ້ພາສາລາວເປັນພາສາແມ່ ໃນການຮຽນພາສາລາວໃນຂັ້ນ ປ.1 ໂດຍຜ່ານການແນະນຳການຝຶກເວົ້າພາສາລາວ 1 ຊົ່ວໂມງຕໍ່ມື້ ແລະ b) ທົດສອບຍຸດທະສາດທີ່ສາມາດເຮັດໄດ້ ແລະ ສາມາດຜ່ອນສັ້ນຜ່ອນຍາວໄດ້ເພື່ອແກ້ໄຂບັນຫາການເຂົ້າເຖິງການສຶກສາ ແລະ ຄວາມເທົ່າທຽມໃນການຮຽນ ໂດຍເປັນການສ້າງຂໍ້ມູນໃຫ້ແກ່ການສ້າງນະໂຍບາຍ ແລະ ການພັດທະນາຫຼັກສູດ ຂອງ ສສກ. ໄລຍະທີ 2 ຈະສະໜັບສະໜູນ ***ໂຄງການຝຶກເວົ້າພາສາລາວ*** ໂດຍຖອດຖອນບົດຮຽນຈາກຜົນການທົດລອງໂຄງການທົດລອງຝຶກເວົ້າພາສາລາວ. ການຂະຫຍາຍລະດັບການຈັດຕັ້ງປະຕິບັດໂຄງການໃຫ້ກວ້າງອອກໃນໄລຍະທີ 2 ແມ່ນໂອກາດທີ່ສຳຄັນທີ່ອາດຈະນຳໄປສູ່ການປັບປຸງທີ່ສຳຄັນໃນການອ່ານອອກຂຽນໄດ້ໃນຂັ້ນ ປ.1 ແລະ ປ.2 ແລະ ປັບປຸງຜົນການຮຽນຂອງນັກຮຽນໃນທົ່ວຫຼັກສູດອີກດ້ວຍ.

[4] ຄຳວ່າການປະເມີນຜົນການຮຽນຂອງນັກຮຽນແມ່ນຖືກນຳໃຊ້ຫຼາຍໃນລະບົບການສຶກສາຂອງລາວ ເຊິ່ງເປັນການປະເມີນນັກຮຽນທົ່ວປະເທດໂດຍນຳໃຊ້ກຸ່ມຕົວຢ່າງ.

[5] ການສະໜັບສະໜູນການປະເມີນຜົນການຮຽນຈະກວມເອົາການປະເມີນຫຼາຍລະດັບທີ່ມີໃນລະບົບຢູ່ແລ້ວ (ເຊັ່ນ ການສອບເສັງພາກຮຽນ). ຈະບໍ່ມີການສະໜັບສະໜູນໃນການພັດທະນາ/ ທົບທວນລະບົບ ສຳລັບການສອບເສັງຈົບຂັ້ນ ຫຼື ຈົບຊັ້ນ (ການສອບເສັງຂັ້ນ ປ.5 ແມ່ນຈັດຕັ້ງປະຕິບັດໃນລະດັບຊັ້ນປະຖົມ).

**ພາບສະແດງທີ 3: ບົດສະຫຼຸບ IO1 - ຫຼັກສູດຊັ້ນປະຖົມສຶກສາ ແລະ ສື່ການຮຽນການສອນ**

| **ຂອບເຂດ ແລະ ກິດຈະກຳຫຼັກ** | **ເຫດຜົນ ແລະ ບັນຫາຫຼັກ** |
|---|---|
| 1.1 ການພັດທະນາ, ການຈັດພິມ ແລະ ການແຈກ ຢາຍສື່ການຮຽນການສອນຂອງວິຊາຫຼັກ (ປຶ້ມແບບຮຽນ, ຄູ່ມືຄູ, ຊຸດອຸປະກອນຄູ ແລະ ສື່ການຮຽນການສອນເສີມ) ສຳລັບຂັ້ນ ປ.5 ໃນ 3 ວິຊາ.<br>ການຮວບຮວມ ແລະ ສຳເລັດຮ່າງສຸດທ້າຍຂອງຂອບຫຼັກສູດຊັ້ນປະຖົມສຶກສາ.<br>ການສະໜອງການສະໜັບສະໜູນທາງດ້ານວິຊາການໃຫ້ແກ່ການຄຸ້ມຄອງຫຼັກສູດແລະການຕິດຕາມ ແລະ ປະເມີນຜົນ ລວມທັງການປັບປຸງສື່ການຮຽນການສອນຂອງຫຼັກສູດໃຫ້ດີຂຶ້ນ. | ການພັດທະນາຫຼັກສູດ, ການຜະລິດ ແລະ<br>ໃນການນຳໃຊ້ຫຼັກສູດ ຈະຖືກຈັດຕັ້ງປະຕິ<br>ທົບທວນກ່ຽວກັບຄວາມສະ ເໜີພາບບົ<br>(ທີ່ໄດ້ຮັບຜົນດີມາແລ້ວ), ໂດຍມີການດັ<br>ສືບຕໍ່ການສະໜັບສະໜູນ ສວສ ທາງດ້<br>ໂດຍອີງຕາມການປະເມີນຄວາມຕ້ອງກ |
| 1.2 ການຝຶກຄູຝຶກ (ToT), ສຳລັບຄູຝຶກຫຼັກແຫຼ່ງ(MT) ແລະ ຄູຝຶກຂັ້ນແຂວງ (PT) ເຊິ່ງເປັນການກະກຽມສຳລັບການຝຶກຄູໃນຂັ້ນ ປ.5 ທົ່ວປະເທດ ໃນການນຳໃຊ້ຫຼັກສູດ 3 ວິຊາ.<br>ການນຳສະເໜີຫຼັກສູດຂັ້ນ ປ.4 ແລະ ປ.5 ໃນທົ່ວປະເທດ (ສຳລັບ 3 ວິຊາ) ໃຫ້ແກ່ທຸກໂຮງຮຽນ ໂດຍຜ່ານການຝຶກຄູປະຈຳການ ແລະ ຄູສຶກສານິເທດທຸກຄົນ. | ການນຳສະເໜີຫຼັກສູດສະບັບປັບປຸງໃໝ<br>ສຳລັບການຈັດຕັ້ງປະຕິບັດ ແລະ ກົນໄກ<br>ການຝຶກອົບຮົມຄູແບບໜ້າເຊິ່ງໜ້າສຳລັ<br>ຫາໄລຍະທີ 2, ສະນັ້ນ ມີຄວາມຈຳເປັນທີ່ຕ້ອ<br>ໂຄງການຝຶກອົບຮົມຕ່າງໆຄວນໃຊ້ຄວາມພ<br>ແລະ ໃຫ້ການສະໜັບສະໜູນທີ່ຈຳເປັນ |
| 1.3 ການປະເມີນນັກຮຽນ<br>ການສະໜັບສະໜູນການຈັດຕັ້ງປະຕິບັດ ແລະ ເຮັດໃຫ້ວຽກງານການປະເມີນຜົນການຮຽນຂອງນັກຮຽນເປັນວຽກປົກກະຕິຂອງສະຖາບັນ.<br>ການພັດທະນາວິທີການ ແລະ ເຄື່ອງມືສຳລັບການປະເມີນເພື່ອປັບປຸງການສອນ ແລະ ການປະເມີນຜົນການຮຽນ. | ການຈັດຕັ້ງປະຕິບັດການປະເມີນຜົນກາ<br>ຂໍ້ມູນຈະຖືກແບ່ງຕາມເພດ, ຄວາມພິກ<br>ການປະເມີນດັ່ງກ່າວຈະເປັນຂໍ້ມູນການ<br>• ຂໍ້ມູນທຽບຖານເບື້ອງຕົ້ນ 2017<br>• ຂໍ້ມູນລະຫວ່າງກາງຂອງການສະໜັ<br>• ຂໍ້ມູນສຸດທ້າຍຂອງການສະໜັບສະ<br>ຈະມີການສະໜັບສະໜູນທາງດ້ານວິຊາ<br>ການສ້າງຂີດຄວາມສາມາດເພື່ອໃຫ້ການ<br>ເຄື່ອງມືການປະເມີນເພື່ອປັບປຸງການສ<br>ເຊື່ອມສານເຂົ້າໃນສື່ການຮຽນການສອນ |
| 1.4 ໂຄງການຝຶກເວົ້າພາສາລາວ<br>ເພື່ອການປັບປຸງຜົນການຮຽນຂອງນັກຮຽນທີ່ເລີ່ມເຂົ້າຮຽນຊັ້ນປະຖົມໂດຍຍັງບໍ່ສາມາດເວົ້າພາສາລາວໄດ້ ເຊິ່ງແມ່ນບັນຫາຄວາມເທົ່າທຽມທີ່ສຳຄັນ. | ການທົດລອງໃນໄລຍະທີ 1 ຂອງແຜນງານ<br>ປ.1 ແລະ ປ.2 ແລະ ຜົນການຮຽນຂອງນັກຮຽ<br>ແລະ ລາຍລະອຽດການອອກແບບຈະອີງ |

## 2. ການພັດທະນາວິຊາຊີບຄູ (IO2)

ໄລຍະທີ 2 ຈະສະໜັບສະໜູນທາງດ້ານວິຊາການ ເພື່ອຊ່ວຍ ສສກ ໃນການ ***ວາງແຜນ ແລະ ອອກແບບດ້ານຕ່າງໆທີ່ຄັດເລືອກຂອງລະບົບພັດທະນາວິຊາຊີບຄູ***. ໄລຍະທີ 1 ໄດ້ສະໜັບສະໜູນ ສສກ ໃນການພັດທະນາມາດຕະຖານການສອນຂອງຄູຊັ້ນປະຖົມ ໃນປີ 2018. ມາດຕະຖານການສອນດັ່ງກ່າວນີ້ຈະເປັນພື້ນຖານໃຫ້ແກ່ການອອກແບບ ແລະ ການຈັດຕັ້ງປະຕິບັດລະບົບພັດທະນາວິຊາຊີບຄູ ເຊິ່ງເປັນວິທີການໃຫ້ແນວທາງການພັດທະນາວິຊາຊີບໂດຍລວມ.

ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໄດ້ກຳນົດການເດີນໜ້າໃນ 3 ດ້ານ ທີ່ຈະເປັນແນວທາງໃຫ້ແກ່ວິທີການຂອງບົດວາ 2. ບຸລິມະສິດສູງທຳອິດແມ່ນການສ້າງຂີດຄວາມສາມາດ ແລະ ລະບົບແຫ່ງຊາດ ສຳລັບການຝຶກຄູປະຈຳການ ແລະ ການພັດທະນາວິຊາຊີບແບບຕໍ່ເນື່ອງໂດຍອີງໃສ່ໂຮງຮຽນເປັນຫຼັກ

ເຊິ່ງເປັນສ່ວນໜຶ່ງຂອງລະບົບຮອບດ້ານ. ບຸລິມະສິດສູງອັນທີສອງ ແມ່ນບົດບາດຂອງວິທະຍາໄລຄູ ຈະຖືກຂະຫຍາຍອອກ ເພື່ອໃຫ້ຮັບຜິດຊອບການສະໜັບສະໜູນການຝຶກອົບຮົມຄູປະຈຳການ. ບຸລິມະສິດສູງອັນທີສາມ ແມ່ນການສ້າງຄວາມເຂັ້ມແຂງຂີດຄວາມສາມາດຂອງຄູສຶກສານິເທດໃນການສະໜັບສະໜູນຄູ, ແລະ ຜູ້ອຳນວຍການໂຮງຮຽນເພື່ອສະໜັບສະໜູນການສອນ ແລະ ການຮຽນໃນໂຮງຮຽນ. ການສຸມໃສ່ການພັດທະນາວິຊາຊີບຄູປະເພດຕ່າງໆ, ແລະ ສຳລັບບຸກຄະລາກອນສຳຄັນຫຼາຍລະດັບ, ປະກອບກັນເປັນວິທີການຮອບດ້ານໃນການປັບປຸງຄຸນນະພາບການສອນ.

ລັກສະນະສະເພາະສຳຄັນຂອງແຜນງານໄລຍະທີ 2 ແມ່ນການສະໜັບສະໜູນວິທະຍາໄລຄູ 3 ແຫ່ງ ແລະ ບັນດາເມືອງເປົ້າໝາຍ ໃນເຂດບໍລິການຂອງວິທະຍາໄລຄູດັ່ງກ່າວ. ສິ່ງດັ່ງກ່າວຈະອຳນວຍຄວາມສະດວກ (ແລະທົດສອບ) ສາຍພົວພັນສຳຄັນລະຫວ່າງບົດບາດຂອງວິທະຍາໄລຄູ ໃນການສະໜອງການຝຶກອົບຮົມຄູປະຈຳການປະເພດຕ່າງໆ, ແລະ ການພັດທະນາ ແລະ ຈັດຕັ້ງປະຕິບັດວິທີການພັດທະນາວິຊາຊີບແບບຕໍ່ເນື່ອງໂດຍອີງໃສ່ໂຮງຮຽນເປັນຫຼັກ, ທີ່ສະໜັບສະໜູນໂດຍຫ້ອງການສຶກສາທິການ ແລະ ກິລາເມືອງ (ສກມ). ຈະມີການສະໜັບສະໜູນໃນການພັດທະນາຂີດຄວາມສາມາດເພື່ອ ***ການອອກແບບ ແລະ ຈັດການຝຶກອົບຮົມຄູປະຈຳການໃຫ້ແກ່ຄູສອນ ແລະ ຄູສຶກສານິເທດ*** ໃນເມືອງເປົ້າໝາຍ. ການອອກແບບການຝຶກອົບຮົມຄູປະຈຳການຈະເນັ້ນໃສ່ວິທີການທີ່ມີຈຸດສຸມ, ອີງຕາມຄວາມຕ້ອງການ ແລະ ມີເປົ້າໝາຍ, ເຊິ່ງຈະມີຄວາມແຕກຕ່າງຈາກການຝຶກອົບຮົມໃນຈຳນວນຫຼາຍແບບໜ້າເຊິ່ງໜ້າສຳລັບຄູທຸກຄົນ. ເມື່ອເວລາຜ່ານໄປ ມີຄວາມຄາດຫວັງວ່າວິທະຍາໄລຄູຈະສ້າງລາຍການຫຼັກສູດຝຶກອົບຮົມຄູປະຈຳການ, ລວມທັງວິທີການທີ່ໃຊ້ໃນການຝຶກອົບຮົມເປັນໂມດູນ, ທີ່ອາດຈະຖືກປັບ ແລະ ຈັດຝຶກອົບຮົມຕາມຄວາມຮຽກຮ້ອງຕ້ອງການ. ວິທີການຂອງການຈັດຝຶກອົບຮົມຄູປະຈຳການຂອງວິທະຍາໄລຄູຈະຖືກພັດທະນາຂຶ້ນ ໂດຍອີງໃສ່ການພິຈາລະນາຢ່າງລະອຽດກ່ຽວກັບປະ ສິດທິພາບຂອງຄ່າໃຊ້ຈ່າຍ ແລະ ປະສິດທິຜົນຂອງການຮຽນ. ບົດຄວາຈະຊ່ວຍ ສສກ ໃນການສ້າງຖານສຳລັບການຖອດຖອນບົດຮຽນ ແລະ ແລກປ່ຽນການປະຕິບັດທີ່ໄດ້ຮັບຜົນດີໃນທົ່ວວິທະຍາໄລຄູ ທີ່ເປັນພື້ນຖານໃຫ້ແກ່ການຂະຫຍາຍການຈັດຕັ້ງປະຕິບັດຫຼັກສູດການຝຶກອົບຮົມຄູປະຈຳການແຫ່ງຊາດ ໂດຍຜ່ານວິທະຍາໄລຄູທັງ 8 ແຫ່ງທົ່ວປະເທດ.

ນອກຈາກນັ້ນ, ໄລຍະທີ 2 ຍັງຈະໃຫ້ການສະໜັບສະໜູນທາງດ້ານວິຊາການແກ່ ສສກ ແລະ ວິທະຍາໄລຄູ ເພື່ອປັບປຸງ***ຫຼັກສູດການຍົກລະດັບການສອນຊັ້ນສູງ*** ສຳລັບຄູສອນໃນລະບົບ, ເພື່ອໃຫ້ເນື້ອໃນຂອງຫຼັກສູດ ແລະ ວິທີການສອນສອດຄ່ອງກັບຫຼັກສູດສ້າງຄູຊັ້ນສູງທີ່ໄດ້ຖືກປັບປຸງໃນໄລຍະທີ 1 ຂອງແຜນງານ (ແລະ ສອດຄ່ອງກັບຫຼັກສູດຊັ້ນປະຖົມສະບັບປັບປຸງໃໝ່). ເນື່ອງຈາກວ່າການປັບປຸງຫຼັກສູດສ້າງຄູຊັ້ນສູງ ໄດ້ຮັບການສະໜັບສະໜູນທາງດ້ານວິຊາການໄປແລ້ວ ໃນໄລຍະທີ 1, ການສືບຕໍ່ປັບປຸງຫຼັກສູດການຍົກລະດັບການສອນຊັ້ນສູງ ໃນໄລຍະທີ 2 ຈະບໍ່ຈຳເປັນຕ້ອງມີການສະໜັບສະໜູນທາງດ້ານວິຊາການສູງປານໃດ. ແຜນງານຈະພິຈາລະນາການສະໜັບສະໜູນການເຂົ້າຮ່ວມຂອງຄູຈາກເຂດດ້ອຍໂອກາດ ແລະ ຫ່າງໄກສອກຫຼີກ, ແລະ ຄູທີ່ເປັນເພດຍິງ (ໂດຍຜ່ານການໃຫ້ທຶນການສຶກສາ ຫຼື ເງິນອຸດໜູນ).

ສາກົນໄດ້ເລັງເຫັນຄວາມສຳຄັນເພີ່ມຂຶ້ນວ່າການສະໜັບສະໜູນຢ່າງຕໍ່ເນື່ອງຫຼັງຈາກການຝຶກອົບຮົມວິຊາຊີບຄູ, ໂດຍຜ່ານຂະບວນການ ການໃຫ້ຄຳປຶກສາ ແລະ ການສະໜອງອຸປະກອນ ແລະ ຊັບພະຍາກອນ ເພື່ອຊ່ວຍໃຫ້ຄູໄດ້ຝຶກຝົນ ແລະ ນຳໃຊ້ສິ່ງທີ່ໄດ້ຮຽນມາເຂົ້າໃນການປະຕິບັດຕົວຈິງ, ຈະຊ່ວຍເພີ່ມປະສິດທະພາບຂອງການຝຶກອົບຮົມຢ່າງຫຼວງຫຼາຍ. ການສະໜັບສະໜູນຫຼັງຈາກການຝຶກອົບຮົມ ແລະ ຊັບພະຍາກອນສຳລັບຄູ ແມ່ນກະແຈສຳຄັນໃນການຮັບປະກັນວ່າສື່ການຮຽນການສອນ ແລະ ວິທີການສອນໃນຫຼັກສູດໃໝ່ ສາມາດນຳໃຊ້ໄດ້ໃນຫ້ອງຮຽນຕົວຈິງ, ແລະ ຊ່ວຍເພີ່ມຄວາມເປັນໄປໄດ້ທີ່ຄູຈະປ່ຽນວິທີການສອນໄປໃນທາງທີ່ດີຂຶ້ນ.

ໄລຍະທີ 2 ຈະສະໜັບສະໜູນ ສສກ ໃນ ***ການພັດທະນາລະບົບພັດທະນາວິຊາຊີບແບບຕໍ່ເນື່ອງ ລວມທັງການອອກແບບວິທີການທາງດ້ານວິຊາການທີ່ສະເພາະ.*** ວຽກງານດັ່ງກ່າວຈະສືບຕໍ່ການສະໜັບສະໜູນໃນໄລຍະທີ 1 ສຳລັບການພັດທະນາ ແລະ ທົດສອບວິທີການພັດທະນາວິຊາຊີບແບບຕໍ່ເນື່ອງ. ການອອກແບບການຝຶກອົບຮົມຄູປະຈຳການ (ດັ່ງທີ່ໄດ້ກ່າວຂ້າງເທິງນີ້)

ຈະລວມທັງຊັບພະຍາກອນສໍາລັບການພັດທະນາວິຊາຊີບແບບຕໍ່ເນື່ອງໂດຍອີງໃສ່ໂຮງຮຽນເປັນຫຼັກແລະ ພາກສ່ວນຕ່າງໆຂອງຫຼັກສູດການຝຶກອົບຮົມຄູປະຈໍາການ ຈະລວມທັງການຝຶກອົບຮົມໂດຍນໍາໃຊ້ວິທີການຂອງການພັດທະນາວິຊາຊີບແບບຕໍ່ເນື່ອງ, ໂດຍສະເພາະແມ່ນສໍາລັບຄູສຶກສານິເທດ. ສິ່ງດັ່ງກ່າວນີ້ຄາດວ່າຈະເປັນວິທີທາງຫຼັກທີ່ວິທະຍາໄລຄູຈະສະໜັບສະໜູນການພັດທະນາວິຊາຊີບແບບຕໍ່ເນື່ອງໂດຍອີງໃສ່ໂຮງຮຽນເປັນຫຼັກ, ໂດຍຮັບຮູ້ວ່າວິທະຍາໄລຄູແມ່ນຕັ້ງຢູ່ຫ່າງໄກຈາກໂຮງຮຽນເກີນໄປທີ່ຈະສາມາດອໍານວຍຄວາມສະດວກໃຫ້ແກ່ການພັດທະນາວິຊາຊີບແບບຕໍ່ເນື່ອງ. ການສ້າງຄວາມເຂັ້ມແຂງໃຫ້ແກ່ເຄືອຂ່າຍກຸ່ມໂຮງຮຽນແມ່ນບຸລິມະສິດສໍາຄັນທາງດ້ານນະໂຍບາຍຂອງ ສສກ ດັ່ງທີ່ໄດ້ກໍານົດໄວ້ໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ. ໄລຍະທີ 2 ຈະນໍາໃຊ້ວິທີການທີ່ປະຕິບັດໄດ້ຈິງ ແລະ ພິຈາລະນາຕາມແຕ່ລະກໍລະນີ ໃນການຈັດຕັ້ງປະຕິບັດການພັດທະນາວິຊາຊີບແບບຕໍ່ເນື່ອງໂດຍອີງໃສ່ກຸ່ມໂຮງຮຽນ, ໂດຍການສະໜັບສະໜູນກຸ່ມໂຮງຮຽນທີ່ສາມາດສະໜອງຖານການພັດທະນາວິຊາຊີບແບບຕໍ່ເນື່ອງໃຫ້ແກ່ຄູຢ່າງມີປະສິດທິຜົນ, ແຕ່ຈະຍອມຮັບໃນກໍລະນີທີ່ບໍ່ສາມາດປະຕິບັດໄດ້.

ຄາດວ່າຈະມີການນໍາໃຊ້ ***ICT*** ***ເພື່ອເປັນວິທີການໃນການສະໜັບສະໜູນການພັດທະນາວິຊາຊີບແບບຕໍ່ເນື່ອງໃຫ້ແກ່ຄູ,*** ຫຼຸດຜ່ອນຄວາມຈໍາເປັນທີ່ຕ້ອງໃຊ້ວິທີການຝຶກອົບຮົມແບບໜ້າເຊິ່ງໜ້າໃນຈໍານວນຫຼາຍ ແລະ ມີຄ່າໃຊ້ຈ່າຍສູງ. ມີຫຼາຍການຄົ້ນຄວ້າ ແລະ ປະຕິບັດຕົວຈິງກ່ຽວກັບການນໍາໃຊ້ ICT ສໍາລັບການພັດທະນາຄູ ໃນປະເທດກໍາລັງພັດທະນາ. ອົງປະກອບສໍາຄັນລວມມີການສະໜອງຊັບພະຍາກອນທາງດ້ານດີຈີຕໍໃຫ້ແກ່ຄູ, ຕົວຢ່າງ, ໃນບາງອົງປະກອບສະເພາະຂອງຫຼັກສູດ, ລວມທັງວິທີການສອນກ່ຽວພັນສະເພາະກັບບາງວິຊາ, ແລະ ພ້ອມນັ້ນກໍສະໜັບສະໜູນສາຍພົວພັນການໃຫ້ຄໍາແນະນໍາ ແລະ ເຄືອຂ່າຍການຮຽນຮູ້ທາງດ້ານວິຊາຊີບ, ພາຍໃຕ້ຂອບວຽກງານການພັດທະນາວິຊາຊີບແບບຕໍ່ເນື່ອງ.ແຜນງານຈະໃຫ້ການສະໜັບສະໜູນທາງດ້ານການວາງແຜນ, ການອອກແບບ, ການທົດສອບ ແລະ ຈັດຕັ້ງປະຕິບັດວິທີການໃໝ່ໆທີ່ສ້າງສັນ, ໂດຍມີການເນັ້ນໃສ່ວິທີການແກ້ໄຂທີ່ສາມາດປະຕິບັດໄດ້ຈິງ ແລະ ມີຄ່າໃຊ້ຈ່າຍທີ່ສົມເຫດສົມຜົນ, ແລະ ຖອດຖອນບົດຮຽນເພື່ອເປັນຫຼັກຖານອ້າງອີງສິ່ງທີ່ປະຕິບັດໄດ້ດີໃນບໍລິບົດທີ່ຄ້າຍຄືກັນ. ບັນຫາການເຂົ້າເຖິງ ICT ໃນເຂດຫ່າງໄກສອກຫຼີກ ຂອງ ສປປ ລາວ ຈະຖືກນໍາເຂົ້າໄປພິຈາລະນາ ເພື່ອຮັບປະກັນວ່າການນໍາໃຊ້ ICT ສໍາລັບການພັດທະນາຄູຈະບໍ່ໄປຕອກຍໍ້າ ຫຼື ເຮັດໃຫ້ຄວາມແຕກໂຕນທີ່ມີຢູ່ແລ້ວນັ້ນຮ້າຍແຮງກວ່າເກົ່າ (ໝາຍເຖິງການສະໜັບສະໜູນຄູໃນເມືອງ ໃນຂະນະທີ່ປະປ່ອຍໃຫ້ຄູທີ່ຢູ່ເຂດຫ່າງໄກສອກຫຼີກໄວ້ທາງຫຼັງໂດຍບໍ່ໄດ້ຮັບການເອົາໃຈ ໃສ່).

**ພາບສະແດງທີ 4: ບົດສະຫຼຸບຂອງ IO2 - ການພັດທະນາວິຊາຊີບຄູ**

| ຂອບເຂດ ແລະ ກິດຈະກໍາຫຼັກ | ເຫດຜົນ ແລະ ບັນຫາຫຼັກ |
|---|---|
| 2.1 ການສະໜັບສະໜູນທາງດ້ານວິຊາການໃຫ້ແກ່ກົມສ້າງຄູ/ສສກ ສໍາລັບວຽກງານນະໂຍບາຍ, ຍຸດທະສາດ ແລະ ລະບົບພັດທະນາວິຊາຊີບຄູ. | ຄາດວ່າ ສສກ ຈະມີຄວາມຄືບໜ້າກ່ຽວກັບຍຸດທ ຂອງແຜນງານ. ໃນກໍລະນີດັ່ງກ່າວ, ແຜນງານຈໍ ມີການປະສານຮ່ວມມືກັບຄູ່ຮ່ວມພັດທະນາອື່ນ. ການສະໜັບສະໜູນຈະສຸມໃສ່ຂົງເຂດວຽກງານທີ່ |
| 2.2. ການສະໜັບສະໜູນກົມສ້າງຄູໃນການພັດທະນາບົດບາດ ແລະ ຂີດຄວາມສາມາດຂອງວິທະຍາໄລຄູ,ລວມທັງໃຫ້ການສະໜັບສະໜູນໃນວິທະຍາໄລຄູເປົ້າໝາຍ 3 ແຫ່ງໃນການອອກແບບ ແລະ ການຈັດການຝຶກອົບຮົມຄູປະຈໍາການ (ສໍາລັບຄູ ແລະ ຄູສຶກສານິເທດ) ໃນເມືອງເປົ້າໝາຍ. | ແຜນງານໄລຍະທີ 2 ບໍ່ສາມາດສະໜອງການຝຶກ ເຊິ່ງແຜນງານຈະສຸມໃສ່ເມືອງເປົ້າໝາຍໃນເຂດ ການຝຶກອົບຮົມຄູປະຈໍາການແບບໜ້າເຊິ່ງໜ້າ ເປັນໄປໄດ້ສູງທີ່ຈະຈັດທີ່ສູນຝຶກອົບຮົມໃນຂັ້ນແ ຈະເຮັດໃຫ້ມີການເຊື່ອມໂຍງກັບການຕິດຕາມໂດຍຜ່າ (ເບິ່ງດ້ານລຸ່ມນີ້). |
| 2.3 ຫຼັກສູດການຍົກລະດັບການສອນຊັ້ນສູງ | ການປັບປຸງຫຼັກສູດການຍົກລະດັບການສອນຊັ້ນສ ແມ່ນການລົງທຶນທີ່ສົມເຫດສົມຜົນສໍາລັບການ |

| ຂອບເຂດ ແລະ ກິດຈະກຳຫຼັກ | ເຫດຜົນ ແລະ ບັນຫາຫຼັກ |
|---|---|
| 2.4 ການສະໜັບສະໜູນການພັດທະນາວິຊາຊີບແບບຕໍ່ເນື່ອງໂດຍອີງໃສ່ໂຮງຮຽນເປັນຫຼັກ ການພັດທະນາລະບົບ, ການອອກແບບ, ການທົດສອບ ແລະ ການຈັດຕັ້ງປະຕິບັດວິທີການພັດທະນາວິຊາຊີບແບບຕໍ່ເນື່ອງສະເພາະໃດໜຶ່ງໃນລະດັບໂຮງຮຽນ ແລະ ກຸ່ມໂຮງຮຽນໃນເມືອງເປົ້າໝາຍ. | ໄລຍະທີ 1 ແມ່ນກຳລັງຊ່ວຍ ສສກ ໃນການພັດທະ<br>ເຊິ່ງຈະສືບຕໍ່ໃນໄລຍະທີ 2 ການພັດທະນາວິທີການພັດ<br>1.<br>ການພັດທະນາວິຊາຊີບແບບຕໍ່ເນື່ອງຈະເສີມສ້າງໃ<br>ຄາດວ່າ ICT ຈະເປັນສ່ວນໜຶ່ງທີ່ສຳຄັນຂອງການ<br>ກຸ່ມໂຮງຮຽນຈະມີບົດບາດໃນການສະໜັບສະໜູ |

3. ການຄຸ້ມຄອງ ແລະ ການສະໜັບສະໜູນຄູ (IO3)

ໄລຍະທີ 2 ຂອງແຜນງານຈະສະໜັບສະໜູນວຽກງານນະໂຍບາຍ ແລະ ການພັດທະນາລະບົບ, ແລະ ການສ້າງຂີດຄວາມສາມາດ ໃນຂົງເຂດວຽກງານທີ່ຈະສ້າງຄວາມເຂັ້ມແຂງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການປັບປຸງການສອນ. ວຽກງານດັ່ງກ່າວນີ້ຈະສຸມໃສ່ດ້ານການວາງແຜນ ແລະ ການຄຸ້ມຄອງໃນຂັ້ນເມືອງ ແລະ ຂັ້ນໂຮງຮຽນ ໂດຍມີການເນັ້ນໜັກທີ່ຈະແຈ້ງໃນການສະໜັບສະໜູນການພັດທະນາຄູແລະຈັດສັນຊັບພະຍາກອນສຳລັບການສອນແລະ ການຮຽນ. ໃນກໍລະນີດັ່ງກ່າວ, ກິດຈະກຳຕ່າງໆຈະເຊື່ອມໂຍງກັບ, ແລະ ເສີມສ້າງການຈັດຕັ້ງປະຕິບັດຫຼັກສູດ (IO1) ແລະ ການພັດທະນາຄູ (IO2).

ຜົນໄດ້ຮັບໄລຍະຍາວທີ່ສຳຄັນໜຶ່ງຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-25 ແມ່ນການສ້າງຄວາມເຂັ້ມແຂງຂີດຄວາມສາມາດໃຫ້ແກ່ອຳນວຍການເພື່ອປັບປຸງການສອນແລະການຮຽນໃນໂຮງຮຽນ. ຖ້າທຽບໃສ່ການຝຶກຄູໃນ ສປປ ລາວ, ຖືວ່າການພັດທະນາຂີດຄວາມສາມາດໃຫ້ແກ່ອຳນວຍການໃນການປັບປຸງການສອນ ແລະ ການຮຽນແມ່ນໄດ້ຮັບຄວາມເອົາໃຈໃສ່ໜ້ອຍ. ໄລຍະທີ 2 ຈະໃຫ້ການສະໜັບສະໜູນ ສສກ ແລະ ວິທະຍາໄລຄູ 3 ແຫ່ງ ເພື່ອພັດທະນາ ແລະ ຈັດຕັ້ງປະຕິບັດ ***ໂຄງການສ້າງຂີດຄວາມສາມາດໃຫ້ແກ່ອຳນວຍການໂຮງຮຽນ*** ໂດຍຜ່ານການຝຶກອົບຮົມຄູປະຈຳການພາຍໃຕ້ໜ້າວຽກຮັບຜິດຊອບທີ່ຂະຫຍາຍອອກຂອງວິທະຍາໄລຄູ. ການສະໜັບສະໜູນຈະຖືກນຳໃຊ້ວິທີການດຽວກັນກັບທີ່ໄດ້ກຳນົດໄວ້ໃນ IO2, ລວມທັງການອອກແບບຫຼັກສູດ ແລະ ອຸປະກອນຕ່າງໆ ແລະ ທຶນສຳລັບການຈັດຕັ້ງປະຕິບັດຫຼັກສູດທີ່ຖືກຄັດເລືອກ. ການຝຶກອົບຮົມຈະສຸມໃສ່ທາງດ້ານວິຊາການໃດນັ້ນແມ່ນຂຶ້ນກັບການວິເຄາະ ແລະ ການອອກແບບຄວາມຕ້ອງການ, ແຕ່ກໍສາມາດເວົ້າໂດຍລວມໄດ້ວ່າການຝຶກອົບຮົມຈະສຸມໃສ່ພາວະການເປັນຜູ້ນຳໃນການໃຫ້ຄຳແນະນຳ, ເຊິ່ງໜ້າຈະກວມເອົາການເພີ່ມຄວາມເຂົ້າໃຈຂອງຜູ້ອຳນວຍການໃນວິທີການສອນ ແລະ ທັກສະຂອງຜູ້ອຳນວຍການໃນການໃຫ້ຄຳແນະນຳຄູ ແລະ ສະໜັບສະໜູນການປ່ຽນແປງໃນທາງບວກໃນວິທີການສອນ.

ໄລຍະທີ 2 ຈະໃຫ້ການສະໜັບສະໜູນທາງດ້ານວິຊາການ ແລະ ການເງິນ ແກ່ ສກມ ໃນເມືອງເປົ້າໝາຍເພື່ອການວິເຄາະ, ການວາງແຜນ ແລະ ການຈັດຕັ້ງປະຕິບັດກິດຈະກຳ ທີ່ຈະສົ່ງເສີມການປັບປຸງການສອນ. ແຜນງານຈະໃຫ້ການສະໜັບສະໜູນໃນການສ້າງຂີດຄວາມສາມາດໃນການນຳໃຊ້ ***ມາດຕະຖານຄຸນນະພາບພື້ນຖານ (FQS)*** ສຳລັບໂຮງຮຽນປະຖົມສຶກສາ ລວມທັງບົດບາດຂອງພະນັກງານ ສກມ ໃນການສະໜັບສະໜູນໂຮງຮຽນເພື່ອຈັດຕັ້ງປະຕິບັດການປະເມີນ FQS ແລະ ການວາງແຜນພັດທະນາໂຮງຮຽນ. FQS ແມ່ນເຄື່ອງມືການປະເມີນຕົນເອງຂອງໂຮງຮຽນເພື່ອເປັນແນວທາງການພັດທະນາໂຮງຮຽນແບບຮອບດ້ານ ໂດຍມີເປົ້າໝາຍສູງສຸດໃນການປັບປຸງຜົນການຮຽນຂອງນັກຮຽນ. ຄາດວ່າຈະມີການສ້າງການເຊື່ອມໂຍງທີ່ຈະແຈ້ງລະຫວ່າງການຈັດຕັ້ງປະຕິບັດຂະບວນການ FQS ແລະ ການສະໜັບໜັບໜູນການພັດທະນາຄູທີ່ອີງໃສ່ຄວາມຕ້ອງການຕົວຈິງ ທີ່ສະໜັບສະໜູນໂດຍບີຄວາ, ທັງການຝຶກອົບຮົມຄູປະຈຳການທີ່ນຳພາໂດຍວິທະຍາໄລຄູ ແລະ ການພັດທະນາວິຊາຊີບແບບຕໍ່ເນື່ອງໂດຍອີງໃສ່ໂຮງຮຽນເປັນຫຼັກ (ດັ່ງທີ່ໄດ້ກຳນົດດ້ານເທິງ). ຂະບວນການຂອງການປະເມີນແຕ່ລະໂຮງຮຽນ ແລະ ການສ້າງຊຸດຂໍ້ມູນໂຮງຮຽນໃນທົ່ວເມືອງຈະຊ່ວຍໃຫ້ ສກມ ສາມາດກຳນົດບຸລິມະສິດກ່ຽວກັບໂຮງຮຽນທີ່ຕ້ອງການການສະໜັບສະໜູນທີ່ສຸດ (ເຊັ່ນໂຮງຮຽນທີ່ຈັດຕັ້ງປະຕິບັດບໍ່ໄດ້ດີ), ກຳນົດຊຸດການສະໜັບສະໜູນທີ່ອອກແບບຕາມຄວາມຕ້ອງການ ດັ່ງທີ່ໄດ້ກຳນົດໄວ້ໃນແຜນພັດທະນາໂຮງຮຽນ, ແລະ ການກຳນົດບຸລິມະສິດ ແລະ ການຈັດສັນງົບປະມານ.

ນອກຈາກຄວາມຮູ້ ແລະ ທັກສະແລ້ວ, ການປ່ຽນແປງໃນການປະພຶດ ແລະ ປະຕິບັດຂອງຄູມີຄວາມເປັນໄປໄດ້ຫຼາຍກວ່າຖ້າຫາກມີການສະໜອງແຮງຈູງໃຈ, ແຮງຈູງໃຈຈະເພີ່ມຂຶ້ນ ແລະ ໂອກາດສຳລັບການປະຕິບັດງານທີ່ດີຂຶ້ນຈະຖືກສ້າງຂຶ້ນ, ເມື່ອມີການສະເໜີແຮງຈູງໃຈ ແລະ ເມື່ອເຮັດໄດ້ຕາມກຳນົດກໍ່ໄດ້ຮັບລາງວັນຕອບແທນຕາມການສະເໜີ. ຍິ່ງໄປກວ່ານັ້ນ, ໂຄງການພັດທະນາວິຊາຊີບຄູຈະມີປະສິດທິຜົນດີຂຶ້ນເມື່ອມີການເຊື່ອມໂຍງກັບໂອກາດໃນການກ້າວໜ້າທາງດ້ານວຽກງານ, ເຊັ່ນ ການໄດ້ຂຶ້ນຊັ້ນຕຳແໜ່ງ ຫຼື ໄດ້ຂຶ້ນເງິນເດືອນ. ໃນບໍລິບົດດັ່ງກ່າວນີ້, ໄລຍະທີ 2 ຈະຮັກສາຄວາມສາມາດໃນການປັບປ່ຽນ ເພື່ອຕອບສະໜອງ ***ນະໂຍບາຍການຄຸ້ມຄອງຄູ*** ທີ່ອາດຈະຖືກສ້າງຂຶ້ນໃໝ່. ບີຄວາຈະປະກອບສ່ວນຢ່າງຕັ້ງໜ້າໃນການປຶກສາຫາລືນະໂຍບາຍກ່ຽວກັບບັນຫາການຄຸ້ມຄອງຄູແລະຊອກຫາຊ່ອງທາງໂອກາດໃນການສະໜັບສະໜູນ, ເຮັດວຽກໃກ້ຊິດກັບແຜນງານຂອງຄູ່ຮ່ວມພັດທະນາອື່ນໆ (ໂດຍສະເພາະແມ່ນ ກອງທຶນສາກົນເພື່ອການສຶກສາ-GPE III[6] ທີ່ລວມມີການສະໜັບສະໜູນການປະເມີນການປະຕິບັດງານຂອງຄູ).

**ພາບສະແດງທີ 5: ບົດສະຫຼຸບຂອງ IO3 - ການຄຸ້ມຄອງ ແລະ ການສະໜັບສະໜູນຄູ**

| ຂອບເຂດ ແລະ ກິດຈະກຳຫຼັກ | ເຫດຜົນ ແລະ ບັນຫາຫຼັກ |
|---|---|
| 3.1<br>ສະໜັບສະໜູນກົມສ້າງຄູໃນການພັດທະນາບົດບາດ ແລະ ຂີດຄວາມສາມາດໃຫ້ແກ່ວິທະຍາໄລຄູ, ລວມທັງການສະໜັບສະໜູນວິທະຍາໄລຄູເປົ້າໝາຍ 3 ແຫ່ງ ສຳລັບການອອກແບບການຝຶກອົບຮົມໃຫ້ແກ່ຜູ້ອຳນວຍການໂຮງຮຽນ ແລະ ການຈັດຕັ້ງປະຕິບັດໃນເມືອງເປົ້າໝາຍ | ສຸມໃສ່ບົດບາດທາງດ້ານວິຊາການຂອງຜູ້ອຳນວຍການ ໃນການຮັບປະກັນຄຸນນະພາບການສ<br>ພາວະຄວາມເປັນຜູ້ນຳໃນການໃຫ້ຄຳແນະນຳ.<br>ຂົງເຂດນີ້ແມ່ນມີຄວາມເປັນເອກະລັກທີ່ບໍ່ໄດ້ມີການສະໜັບສະໜູນຈາກຄູ່ຮ່ວມພັດທ<br>ວິທີການຈັດຕັ້ງປະຕິບັດຈະຄ້າຍຄືການຝຶກອົບຮົມຄູປະຈຳການໂດຍວິທະຍາໄລຄູ ໃນ IO<br>ຄາດວ່າຮູບແບບຕ່າງໆຂອງການພັດທະນາວິຊາຊີບແບບຕໍ່ເນື່ອງໃຫ້ແກ່ຜູ້ອຳນວຍການໂຮງຮຽນ<br>(ເຊັ່ນ ຜ່ານເຄືອຂ່າຍກຸ່ມໂຮງຮຽນ, ໄດ້ຮັບການສະໜັບສະໜູນທາງດ້ານອຸປະກອນ/ ICT). |
| 3.2 ການສ້າງຂີດຄວາມສາ ມາດໃຫ້ແກ່ ສກມ ເປົ້າໝາຍເພື່ອສະໜັບສະໜູນການປັບປຸງການສອນ ແລະ ການຮຽນ. | ລວມທັງການສ້າງຂີດຄວາມສາມາດໃນການນຳໃຊ້ FQS<br>ເປັນເຄື່ອງມືໃນການກຳນົດຄວາມຕ້ອງການສຳລັບການພັດທະນາໂຮງຮຽນ ໂດຍສຸມໃສ່ຄຸນນ<br>ບີຄວາຈະສຸມໃສ່ດ້ານວິຊາການ (ການສອນ ແລະ ການຮຽນ) ແຕ່ບໍ່ແມ່ນດ້ານບໍລິຫານ,<br>ອາດຈະກຳນົດຄວາມຕ້ອງການດ້ານການພັດທະນາຄູ ໄປຫາວິທະຍາໄລຄູ ໂດຍຜ່ານຂະ<br>ການສະໜັບສະໜູນ FQS ຈະມີການຮ່ວມມືກັບຄູ່ຮ່ວມພັດທະນາອື່ນໆ (GPE III, ຢູນິເຊັບ). |
| 3.3. ສະໜັບສະໜູນນະໂຍບາຍການຄຸ້ມຄອງຄູ | ການສະໜັບສະໜູນທີ່ສາມາດປັບປ່ຽນໄດ້ໃນການພັດທະນາ, ທົດລອງ ແລະ ຈັດຕັ້ງປະຕິບັດ<br>ໂດຍອີງຕາມສະພາບການ ແລະ ຄວາມຕ້ອງການທີ່ເກີດຂຶ້ນ.<br>ໝາຍເຫດວ່າ GPE III ຈະສະໜັບສະໜູນໃນຂົງເຂດວຽກງານຫຼັກຂອງການຄຸ້ມຄອງຄູ ລວມ<br>ການປະເມີນການປະຕິບັດງານຂອງຄູ. |

## ວິທີການຈັດຕັ້ງປະຕິບັດແບບມີເຂດເປົ້າໝາຍ

ລັກສະນະສະເພາະຂອງການກຳນົດເຂດເປົ້າໝາຍຂອງໄລຍະທີ 2 ແມ່ນການສະໜັບສະໜູນເມືອງພາຍໃນເຂດບໍລິການຂອງວິທະຍາໄລຄູ 3 ແຫ່ງ ທີ່ຈະໄດ້ຮັບການສະໜັບສະໜູນ (ຈາກວິທະຍາໄລຄູ 8 ແຫ່ງທົ່ວປະເທດ), ເພື່ອອຳນວຍຄວາມສະດວກໃຫ້ການເຊື່ອມໂຍງທີ່ສຳຄັນລະຫວ່າງວິທະຍາໄລຄູໃນການສະໜອງການຝຶກອົບຮົມຄູປະຈຳການ ປະເພດຕ່າງໆ, ແລະ ການພັດທະນາ ແລະ ຈັດຕັ້ງປະຕິບັດວິທີການພັດທະນາວິຊາຊີບແບບຕໍ່ເນື່ອງໂດຍອີງໃສ່ໂຮງຮຽນເປັນຫຼັກ. ເມືອງເປົ້າໝາຍຈະໄດ້ຮັບການສະໜັບສະໜູນໃນກິດຈະກຳຂອງ IO2 ແລະ IO3 ດັ່ງທີ່ໄດ້ອະທິບາຍດ້ານເທິງ, ນອກນັ້ນຍັງມີເມືອງທີ່ຖືກຄັດເລືອກທີ່ໄດ້ຮັບການສະໜັບສະໜູນໃນການຈັດຕັ້ງປະຕິບັດໂຄງການເພື່ອທົດລອງການຝຶກອົ

[6] ກອງທຶນສາກົນເພື່ອການສຶກສາທີ່ ສປປ ລາວໄດ້ຮັບທຶນໃນໄລຍະທີ 3: ໂຄງການເລັ່ງການຮຽນຮູ້ ແລະ ຄວາມເທົ່າທຽມ. ການສະໜອງທຶນຜ່ານການຄຸ້ມຄອງຂອງທະນາຄານໂລກ.

າພາສາລາວ[7]. ເມືອງດ້ອຍໂອກາດຈະໄດ້ຮັບການສະໜັບສະໜູນໂດຍອີງຕາມອົງປະກອບຕົວຊີ້ບອກກ່ຽວກັບຜົນປະຕິບັດງານທາງດ້ານການສຶກສາ, ດັ່ງນັ້ນ ການວາງເປົ້າໝາຍແມ່ນແນໃສ່ເມືອງທີ່ປະຕິບັດບໍ່ໄດ້ດີແລະ ມີຄວາມສາມາດຈຳກັດ, ເຊິ່ງເປັນການສຸມໃສ່ການສ້າງຄວາມເທົ່າທຽມ. 40 ເມືອງທີ່ໄດ້ຮັບການສະໜັບສະໜູນ ຈາກ GPE III ກ່ຽວກັບການຈັດສັນຄູ ຈະບໍ່ໄດ້ຮັບການສະໜັບສະໜູນຈາກບີຄວາ. ເມືອງທີ່ຖືກຄັດເລືອກໃນບີຄວາ ໄລຍະ ທີ 1 ທີ່ກົງກັບເງື່ອນໄຂທີ່ກ່າວມາສຳລັບໄລຍະທີ 2 ຈະໄດ້ຮັບການສະໜັບສະໜູນ, ເພື່ອເຮັດໃຫ້ສາມາດວັດແທກຄວາມຄືບໜ້າ ແລະ ຜົນກະທົບຂອງບີຄວາໄລຍະທີ 1 ໃນໄລຍະທີ 2 ແລະ ນອກນັ້ນ ຍັງເປັນການສືບຕໍ່ວິທີການທີ່ກ່ຽວຂ້ອງໃນໄລຍະທີ 1 ໃນບັນດາເມືອງເຫຼົ່ານີ້. ການຄັດເລືອກເມືອງຈະຮັບປະກັນການວ່າມີເມືອງທີ່ນອນຢູ່ໃນທຸກພາກພື້ນຂອງປະເທດ.

ໄດ້ມີການສະເໜີວ່າ ແຜນງານຈະສະໜັບສະໜູນ 29 ເມືອງ, ນອນໃນ 7 ຂອງ 18 ແຂວງ, ພາຍໃນເຂດບໍລິການຂອງວິທະຍາໄລຄູຫຼວງນ້ຳທາ, ຄັງໄຂ ແລະ ສະຫວັນນະເຂດ ໃນນັ້ນລວມມີ 10 ເມືອງຈາກໄລຍະທີ 1. ໃນ 29 ເມືອງດັ່ງກ່າວນີ້ ມີໂຮງຮຽນປະຖົມ 2,070 ແຫ່ງ, ມີຄູ ປະມານ 6,800 ຄົນ ແລະ ມີນັກຮຽນປະມານ 141,000 ຄົນ. ບັນດາເມືອງເຫຼົ່ານີ້ມີອັດຕາສະເລ່ຍຂອງຈຳນວນຫ້ອງຄວບສູງກວ່າອັດຕາສະເລ່ຍທົ່ວປະເທດ ແລະ 18 ເມືອງຂອງ 29 ເມືອງດັ່ງກ່າວມີປະຊາກອນສ່ວນໃຫຍ່ບໍ່ເວົ້າພາສາລາວເປັນພາສາແມ່.

ກົນໄກການໃຫ້ທຶນ ແລະ ການລາຍງານສຳລັບການສະໜັບສະໜູນກິດຈະກຳໃນຂັ້ນເມືອງຈະພິຈາລະນາປະສົບການແລະ ບົດຮຽນທີ່ໄດ້ຈາກໄລຍະທີ 1. ຄາດວ່າການຈັດການທາງດ້ານການເງິນຄ້າຍຄືການໃຫ້ທຶນສະໜັບສະໜູນການສຶກສາ (ESGs) ໜ້າຈະມີຄວາມເໝາະສົມ.
ແຜນງານຈະພິຈາລະນາຄວາມເປັນໄປໄດ້ໃນການເພີ່ມທຶນໃຫ້ແກ່ເມືອງທີ່ສາມາດສະແດງໃຫ້ເຫັນການນຳໃຊ້ທຶນຢ່າງມີປະສິດທິຜົນ ແລະ ມີຜົນໄດ້ຮັບທີ່ດີ.

## E. ການຄຸ້ມຄອງການຈັດຕັ້ງປະຕິບັດ ແລະ ວິທີການດຳເນີນງານ

ຈະມີການຮ່ວມງານກັບຜູ້ມອບເໝົາຄຸ້ມຄອງແຜນງານທີ່ເໝາະສົມ ໃນການຈັດຕັ້ງປະຕິບັດບີຄວາ 2. ປະສົບການຈາກບີຄວາໄລຍະທີ 1 ໄດ້ສະແດງໃຫ້ເຫັນວ່າຮູບແບບນີ້ສາມາດເຮັດໃຫ້ການຈັດຕັ້ງປະຕິບັດມີປະສິດທິພາບ, ສາມາດປັບປ່ຽນໄດ້ແລະສາມາດຈັດຕັ້ງປະຕິບັດໄດ້ຢ່າງໄວວາແລະ ຈັດຕັ້ງປະຕິບັດກິດຈະກຳໃນຂັ້ນສູນກາງ, ຂັ້ນແຂວງແລະ ຂັ້ນເມືອງ ບາງຄັ້ງກໍພາຍໃຕ້ເວລາທີ່ຮີບດ່ວນ ແລະ ສະພາບແວດລ້ອມທີ່ມີຂີດຄວາມສາມາດຈຳກັດ ໃນຂະນະທີ່ຕ້ອງຕາງໜ້າລັດຖະບານອົດສະຕຣາລີໃນການຈັດຕັ້ງປະຕິບັດຢ່າງເຄັ່ງຄັດ ແລະ ຕ້ອງຮັກສາມາດຕະຖານຂອງການເຮັດວຽກ. ນອກນັ້ນ ສະຖານທູດອົດສະຕຣາລີກໍໄດ້ຮັບການຮັບປະກັນທີ່ຈຳເປັນ ແລະ ສາມາດຄຸ້ມຄອງການຈັດຕັ້ງປະຕິບັດແຜນງານ ໃຫ້ສອດຄ່ອງກັບມາດຕະຖານ ແລະ ບຸລິມະສິດຂອງກະຊວງການຕ່າງປະເທດຂອງອົດສະຕຣາລີ.
ສະຖານທູດອົດສະຕຣາລີຈະສືບຕໍ່ຄຸ້ມຄອງແຜນງານໃນລັກສະນະທີ່ສາມາດປັບປ່ຽນ, ອີງໃສ່ຜູ້ມອບເໝົາຄຸ້ມຄອງແຜນງານສຳລັບການປະຕິບັດງານປະຈຳວັນ ໃນຂະນະທີ່ມີການທົບທວນທິດສະດີຂອງແຜນງານເປັນໄລຍະ ແລະ ປັບທິດທາງ ແລະ ການຈັດຕັ້ງປະຕິບັດແຜນງານຢ່າງຕໍ່ເນື່ອງ ໂດຍອີງຕາມຜົນການຈັດຕັ້ງປະຕິບັດ ແລະ ບໍລິບົດທີ່ມີການປ່ຽນແປງຕະຫຼອດເວລາ.

ທີມຮັບຜິດຊອບວຽກງານສຶກສາຂອງສະຖານທູດອົດສະຕຣາລີ ຈະຮັກສາການຕິດຕາມກວດກາການຈັດຕັ້ງປະຕິບັດແຜນງານເພື່ອຮັບປະກັນຄຸນນະພາບ, ການຮັບຮູ້ການສະໜັບສະໜູນຂອງອົດສະຕຣາລີຈາກພາຍນອກທີ່ເໝາະສົມ ແລະ ການປະຕິບັດຕາມມາດຕະຖານຂອງກະຊວງການຕ່າງປະເທດຂອງອົດສະຕຣາລີ, ໃນຂະນະທີ່ສຸມໃສ່ການສົ່ງເສີມ ແລະ ປຶກສາຫາລືທາງດ້ານນະໂຍບາຍກ່ຽວກັບບັນຫາຫຼັກທີ່ເຊື່ອມໂຍງກັບຄຸນນະພາບການສອນແລະການຮຽນຂອງນັກຮຽນ. ບັນຫາເຫຼົ່ານີ້ ແລະ ຍຸດທະສາດທີ່ກ່ຽວຂ້ອງຈະຖືກກຳນົດ ແລະ ພັດທະນາໂດຍສະຖານທູດອົດສະຕຣາລີ, ໂດຍມີຄວາມສອດຄ່ອງກັບທິດທາງ ແລະ ບຸລິມະສິດຂອງຍຸດທະສາດການຮ່ວມມືຂອງກະຊວງການຕ່າງປະເທດຂອງອົດສະຕຣາລີ ໃນ ສປປ ລາວ. ທີມຮັບຜິດຊອບວຽກງານສຶກສາຂອງສະຖານທູດອົດສະຕຣາລີ ຈະຄົ້ນຄວ້າການເຮັດສັນຍາກັບກຸ່ມຊ່ຽວຊານອິດສະຫຼະທີ່ໃຫ້ຄຳແນະນຳທາງດ້ານວິຊາການ (Technical Advisory Group-TAG)

[7] ວິທີການສະໜັບສະໜູນແບບມີເຂດເປົ້າໝາຍດັ່ງກ່າວນີ້ແມ່ນເພີ່ມຕື່ມຈາກການສະໜອງສື່ການຮຽນການສອນຂອງຫຼັກສູດຂັ້ນປະຖົມສຶກສາສະບັບປັບປຸງໃໝ່ ແລະ ການຝຶກອົບຮົມຄູປະຈຳການໃນທົ່ວປະເທດ ພາຍໃຕ້ IO1 (ສຳລັບທັງໝົດ 148 ເມືອງ).

ທີ່ຈະລວມມີຊ່ຽວຊານທາງດ້ານການສຶກສາ ແລະ ການຕິດຕາມ, ປະເມີນຜົນ ແລະ ການຖອດຖອນບົດຮຽນເພື່ອສະໜັບສະໜູນການມີສ່ວນຮ່ວມໃນວຽກງານນະໂຍບາຍຂອງການສຶກສາ, ການຈັດຕັ້ງປະຕິບັດແຜນງານ ແລະ ການຕິດຕາມ ແລະ ປະເມີນຜົນ.

ຈະມີການເຈລະຈາກັບລັດຖະບານລາວເພື່ອສ້າງຕັ້ງລະບົບການບໍລິຫານ ເພື່ອຮັບປະກັນການປຶກສາຫາລືໃນລະດັບຍຸດທະສາດ ແລະ ມີການແບ່ງປັນບົດຮຽນທີ່ຖອດຖອນໄດ້ຢ່າງເປັນປົກກະຕິ, ໂດຍມີຈຸດປະສົງໃນການດັດປັບ ແລະ ປັບປຸງການຈັດຕັ້ງປະຕິບັດແຜນງານ. ລະບົບການບໍລິຫານທີ່ສະເໜີແມ່ນຈະລວມມີກອງປະຊຸມລະດັບຍຸດທະສາດປະຈໍາປີ (ໂດຍການເປັນປະທານໃນລະດັບລັດຖະມົນຕີ ຂອງ ສສກ) ແລະ ກອງປະຊຸມລະດັບວິຊາການປະຈໍາໄຕມາດໂດຍມີຜູ້ເຂົ້າຮ່ວມຈາກພະແນກສຶກສາທິການ ແລະ ກິລາແຂວງ, ວິທະຍາໄລຄູ, ຫົວໜ້າກົມຫຼັກ ຂອງ ສສກ, ຜູ້ມອບ ເໝົາຄຸ້ມຄອງໂຄງການ ແລະ ສະຖານທູດອົດສະຕຣາລີ. ຈະມີຄວາມພະຍາຍາມຢ່າງຕັ້ງໜ້າເພື່ອໃຫ້ມີຕົວແທນ ແລະ ການນໍາພາຂອງແມ່ຍິງພາຍໃຕ້ໂຄງສ້າງຂອງການຈັດຕັ້ງແຜນງານ, ໂດຍສະເພາະແມ່ນໃນບົດບາດຫຼັກ. ການທົບທວນຄວາມຄືບໜ້າຂອງຍຸດທະສາດ ແລະ ແຜນຈັດຕັ້ງປະຕິບັດວຽກງານຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະ ສັງຄົມ ຈະເປັນວາລະມາດຕະຖານໃນກອງປະຊຸມເຫຼົ່ານີ້.

ໂດຍຜ່ານບົດບາດການເປັນປະທານຮ່ວມຂອງໜ່ວຍງານວິຊາການຂະແໜງການສຶກສາ, ສະຖານທູດອົດສະຕຣາລີຈະສືບຕໍ່ບົດບາດການເປັນຜູ້ນໍາໃນການປຶກສາຫາລືໃນລະດັບນະໂຍບາຍ ກັບລັດຖະບານລາວໃນບັນຫາການປະຕິຮູບທີ່ທ້າທາຍຕ່າງໆ ທີ່ກ່ຽວຂ້ອງກັບການລົງທຶນໃນຂະແໜງການສຶກສາຂອງພວກເຮົາ, ລວມທັງບັນຫາການໃຫ້ທຶນ, ຄວາມເທົ່າທຽມ ແລະ ຄວາມສະເໝີພາບໃນຂະແໜງສຶກສາ. ຕາຕະລາງການສົນທະນາດ້ານນະໂຍບາຍຈະຖືກພັດທະນາຂຶ້ນ. ສະຖານທູດຈະສືບຕໍ່ການປະສານງານຢ່າງໃກ້ຊິດກັບບັນດາຄູ່ຮ່ວມພັດທະນາຫຼັກອື່ນໆໃນຂະແໜງສຶກສາ ລວມທັງສະຫະພາບເອີຣົບ, ອົງການໄຈກ້າ, ຢູນິເຊັບ, ອົງການຊ່ວຍເຫຼືອສາກົນຂອງປະເທດສະຫະລັດອາເມລິກາ ແລະ ທະນາຄານໂລກ. ນອກນັ້ນ ອົດສະຕຣາລີຈະສືບຕໍ່ໃນການພັດທະນາ ແລະ ບໍາລຸງຮັກສາການຮ່ວມມືຢ່າງໃກ້ຊິດໃນຂະແໜງການທີ່ກ່ຽວຂ້ອງອື່ນໆ ເພື່ອຊອກຫາວິທີສົ່ງເສີມ ແລະ ສະໜັບສະໜູນລັດຖະບານລາວກ່ຽວກັບການປະຕິຮູບການໃຫ້ບໍລິການສາທາລະນະທີ່ກ່ຽວຂ້ອງ. ຕົວຢ່າງ: ອົດສະຕຣາລີຈະສະໜັບສະໜູນຫຼາຍຊຸດກິດຈະກໍາໃນການສ້າງຂີດຄວາມສາມາດ ໃຫ້ລັດຖະບານລາວໃນການຄຸ້ມຄອງການເງິນພາກລັດ ທີ່ນໍາພາໂດຍທະນາຄານໂລກ, ລວມທັງການສຸມໃສ່ໃນການປັບປຸງປະສິດທິພາບ, ປະສິດທິຜົນ ແລະ ຄວາມເທົ່າທຽມໃນການໃຊ້ຈ່າຍໃນການສຶກສາ.

ຍຸດທະສາດກ່ຽວກັບພະຍາດໂຄວິດ-19 ຈະຖືກພັດທະນາຂຶ້ນ, ໂດຍມີການກໍານົດມາດຕະການທີ່ຈະຖືກເຊື່ອມສານເຂົ້າໃນທົ່ວກິດຈະກໍາຂອງໄລຍະທີ 2. ສິ່ງດັ່ງກ່າວນີ້ຈະລວມມີມາດຕະການໃນການໃຫ້ການບໍລິການກ່ຽວກັບສຸຂະພາບ, ສຸຂະອະນາໄມ ແລະ ຄວາມປອດໄພທີ່ຈໍາເປັນ ໂດຍມີມາດຕະຖານທີ່ເໝາະສົມ. ນອກນັ້ນ, ເມື່ອເປັນໄປໄດ້, ແຜນງານຈະຊ່ວຍອອກແບບກິດຈະກໍາເພື່ອເພີ່ມຈິດສໍານຶກກ່ຽວກັບຄວາມສ່ຽງ ແລະ ປັບປຸງການປະຕິບັດກ່ຽວກັບສຸຂະພາບ ແລະ ສຸຂະອະນາໄມໂດຍກ່ຽວພັນກັບລັກສະນະ ແລະ ການແຜ່ລະບາດຂອງໂຄວິດ-19 ແລະ ພະຍາດຕິດຕໍ່ອື່ນໆ.

ບົດວາ 2 ໄດ້ຖືກປະເມີນວ່າມີຄວາມສ່ຽງໃນລະດັບກາງ ໂດຍອີງໃສ່ການປົກປ້ອງທາງດ້ານສະພາບແວດລ້ອມ ແລະ ສັງຄົມທັງ 5 ຂໍ້ ແລະ ການໃຫ້ຄະແນນຄວາມສ່ຽງໂດຍລວມຂອງກະຊວງການຕ່າງປະເທດຂອງອົດສະຕຣາລີ. ຍຸດທະສາດການຈໍາກັດຄວາມສ່ຽງຈະຖືກພັດທະນາຂຶ້ນໃນໄລຍະເລີ່ມຕົ້ນຂອງໄລຍະທີ 2.

## F. ການຕິດຕາມ ແລະ ປະເມີນຜົນ

ຜົນການປະຕິບັດງານຂອງແຜນງານຈະຖືກຕິດຕາມ ແລະ ປະເມີນຜົນຢ່າງໃກ້ຊິດ, ລວມທັງໃນລະດັບຜົນໄດ້ຮັບໄລຍະຍາວ ແລະ ເປົ້າໝາຍສູງສຸດ. ໂດຍສະເພາະ, ຈະມີການວັດທ່າອຽງໃນຜົນການຮຽນຂອງນັກຮຽນ ໂດຍການສະໜັບສະໜູນການປະເມີນຜົນການຮຽນຂອງນັກຮຽນຂັ້ນ ປ.3 ແຫ່ງຊາດ ຂອງ ສສກ (ASLO) ໃນປີ 2023 ຫຼື 2024, ແລະນໍາໃຊ້ການປະເມີນການຮຽນຂອງນັກຮຽນຂັ້ນ ປ.5 ຂອງອາຊີຕາເວັນອອກສຽງໃຕ້ ໃນປີ 2023.

ລະບົບການຕິດຕາມ, ປະເມີນຜົນ ແລະ ການຖອດຖອນບົດຮຽນ (MEL) ຈະຖືກພັດທະນາຂຶ້ນ. ລະບົບ MEL ເປັນເຄື່ອງມືໃນການຄຸ້ມຄອງທີ່ສຳຄັນອັນໜຶ່ງ ແລະ ຈະເປັນເຄື່ອງມືໃນການຮັບປະກັນຄວາມຮັບຜິດຊອບໃນການນຳໃຊ້ທຶນຂອງລັດ, ປະເມີນຄວາມເໝາະສົມ ແລະ ຄວາມພຽງພໍໃນການບັນລຸຜົນຂອງແຜນງານ, ແລະ ຖອດຖອນບົດຮຽນສຳລັບການປັບປຸງແຜນງານ ແລະ ນອກເໜືອແຜນງານ. ສະນັ້ນ, ຈຸດປະສົງຂອງລະບົບ MEL ແມ່ນ: i) ເພື່ອຕິດຕາມ ແລະ ບັນທຶກຜົນການປະຕິບັດງານ ແລະ ຄວາມຄືບໜ້າຂອງແຜນງານ ທຽບກັບແຜນ ແລະ ງົບປະມານ; ii) ເພື່ອປະເມີນວ່າການຊ່ວຍເຫຼືອຂອງບີຄວາໄດ້ປັບປຸງຜົນການຮຽນຂອງນັກຮຽນ ແລະ ວິທີການສອນທີ່ສົ່ງເສີມການຮຽນຮ່ວມຫຼາຍຊ່ຳໃດ ແລະ ປັບປຸງແນວໃດ; ແລະ iii) ເພື່ອກຳນົດວິທີການ ແລະ ປັດໃຈຂອງຜົນສຳເລັດທີ່ປັບປຸງຜົນການຮຽນຂອງນັກຮຽນ ແລະ ວິທີການສອນທີ່ສົ່ງເສີມການຮຽນຮ່ວມ.

ລະບົບ MEL ຈະປະຕິບັດຕາມມາດຕະຖານການຕິດຕາມ ແລະ ປະເມີນຜົນຂອງກະຊວງການຕ່າງປະເທດຂອງອົດສະຕຣາລີ. ລະບົບດັ່ງກ່າວມີການອອກແບບໃຫ້ມີຍຸດທະສາດ ຄື: ຄຳຖາມກ່ຽວກັບຜົນການປະຕິບັດງານຫຼັກຈະເປັນແນວທາງໃຫ້ໂຄງສ້າງ ແລະ ວິທີການຂອງລະບົບ, ແລະ ຂອບຜົນໄດ້ຮັບຈະສະໜອງເກນມາດຕະຖານເພື່ອເປັນຂໍ້ມູນທຽບຜົນສຳເລັດທີ່ສາມາດສ້າງໄດ້. ເພື່ອຕອບຄຳຖາມຫຼັກ, ລະບົບຈະລວມມີ ແລະ ກຳນົດແຈ້ງ 3 ໜ້າທີ່ ທີ່ຈະແຈ້ງແລະ ເສີມສ້າງກັນ ຄື: ການຕິດຕາມ, ປະເມີນຜົນ ແລະ ການຖອດຖອນບົດຮຽນ. ໜ້າທີ່ທັງ 3 ນີ້ ຈະສ້າງຂໍ້ມູນທີ່ເປັນຫຼັກຖານກ່ຽວກັບຜົນການປະຕິບັດງານຕາມບໍລິບົດທີ່ສາມາດລົງມືປະຕິບັດໄດ້. ໜ້າທີ່ເຫຼົ່ານີ້ຈະກຳນົດມາດຕະການຂໍ້ມູນທຽບຖານ ແລະ ຕິດຕາມການປ່ຽນແປງໃນທຸກຂັ້ນຂອງຫຼັກເຫດ ແລະ ຜົນ ແລະ ສົມມຸດຖານທີ່ສຳຄັນຂອງແຜນງານ, ຂໍ້ມູນລວມໃນຂັ້ນກິດຈະກຳ ເພື່ອວັດແທກ ແລະ ອະທິບາຍການປະກອບສ່ວນຂອງແຜນງານຕໍ່ການບັນລຸຜົນໄດ້ຮັບໄລຍະຍາວໃນຕອນທ້າຍຂອງແຜນງານ. ງົບປະມານສະເພາະໄດ້ຖືກວາງໄວ້ (500,000 ດອນລາອົດສະຕຣາລີຕໍ່ປີ) ສຳລັບຊ່ຽວຊານ ແລະ ກິດຈະກຳຂອງ MEL.

ເພື່ອເຕີມເຕັມ MEL ພາຍໃນໂຄງການຢ່າງຕໍ່ເນື່ອງ, ສະຖານທູດຈະຄົ້ນຄວ້າເພື່ອຈັດກອງປະຊຸມຖອດຖອນບົດຮຽນທຸກໆ6 ເດືອນ (ສະຖານທູດ ແລະ ຜູ້ມອບເໝົາຄຸ້ມຄອງແຜນງານ) ເພື່ອໃຫ້ເກີດຂຶ້ນພ້ອມໆກັນກັບການສົ່ງບົດລາຍງານຄວາມຄືບໜ້າ. ການສົນທະນາຈະກວມເອົາການປ່ຽນແປງທາງດ້ານບໍລິບົດ ແລະ ຜົນໄດ້ຮັບຂອງແຜນງານ, ແລະ ທົບທວນທິດສະດີຂອງການປະຕິບັດງານ, ຢັ້ງຢືນຄືນທິດທາງຂອງແຜນງານ ແລະ ຖອດຖອນບົດຮຽນເພື່ອນຳໃຊ້ເຂົ້າໃນການປະຕິບັດກິດຈະກຳຂອງແຜນງານ. ການທົບທວນໄລຍະກາງຂອງແຜນງານໄລຍະທີ 2 ທີ່ນຳພາໂດຍສະຖານທູດອົດສະຕຣາລີ ຈະຖືກດຳເນີນໃນປີ 2024. ການທົບທວນຈະປະເມີນຜົນການປະຕິບັດງານແຜນງານໃນຂັ້ນຍຸດທະສາດ, ລວມທັງຄວາມຄືບໜ້າ, ອຸປະສັກ ແລະ ຄວາມສ່ຽງ, ແລະ ແນະນຳທິດທາງໃນຕໍ່ໜ້າສຳລັບໄລຍະທີ່ເຫຼືອຂອງແຜນງານໄລຍະທີ 2 ແລະ ຄວາມເປັນໄປໄດ້ໃນການຂະຫຍາຍໄລຍະເວລາຂອງແຜນງານອອກໄປອີກ.

ນອກຈາກນັ້ນ, ພະແນກພັດທະນາການສຶກສາຂອງກະຊວງການຕ່າງປະເທດຂອງອົດສະຕຣາລີ ກໍຍັງສະໜັບສະໜູນການປະເມີນກ່ຽວກັບການລົງທຶນໃນການພັດທະນາຄູໃນຫຼາຍປະເທດແລະຫຼາຍປີ, ລວມທັງໃນ ສປປ ລາວ. ການປະເມີນດັ່ງກ່າວນີ້, ເຊິ່ງເນັ້ນໃສ່ຂັ້ນ ປ.1 ແລະ ປ.3, ບໍ່ພຽງແຕ່ຈະສະໜອງຂໍ້ມູນທີ່ເປັນຫຼັກຖານຂອງການປ່ຽນແປງໃນວິທີການສອນ ແຕ່ຍັງຈະສະໜອງຂໍ້ມູນກ່ຽວກັບຜົນການຮຽນໃນການອ່ານອອກຂຽນໄດ້ຂອງນັກຮຽນ. ຜົນຂອງການປະເມີນ (ຂໍ້ມູນຕອນກາງ ແລະ ຂໍ້ມູນຕອນທ້າຍຂອງການປະເມີນ) ຈະເປັນຕົວແທນໃຫ້ 32 ເມືອງເປົ້າໝາຍຂອງບີຄວາໄລຍະທີ 1. ສິ່ງດັ່ງກ່າວຈະປະກອບສ່ວນໃຫ້ແກ່ການວັດແທກຜົນການປະຕິບັດງານຂອງແຜນງານໄລຍະທີ 1 ແລະ ຍັງຈະເປັນຂໍ້ມູນໃຫ້ແກ່ການວາງແຜນ ແລະ ການກຳນົດວິທີການສະເພາະຂອງແຜນງານໄລຍະທີ 2.

## G. ບົດບາດຍິງ-ຊາຍ, ຄວາມພິການ ແລະ ບັນຫາປິ່ນອ້ອມອື່ນໆ

ບົນພື້ນຖານຜົນສຳເລັດຂອງບີຄວາໄລຍະທີ 1, ແຜນງານຈະສືບຕໍ່ສຸມໃສ່ບັນຫາບົດບາດຍິງ-ຊາຍ ແລະ ການຮຽນຮ່ວມເຊິ່ງກົງກັບຄຸນຄ່າທີ່ອົດສະຕຣາລີສົ່ງເສີມກ່ຽວກັບຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະ ສັງຄົມ ແລະ ສິດທິມະນຸດ.

ວິທີການຂອງໄລຍະທີ 1, ເຊັ່ນ ການເຊື່ອມສານຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະ ສັງຄົມ ເຂົ້າໃນສື່ການຮຽນການສອນຂອງຫຼັກສູດ ແລະ ການສະໜັບສະໜູນການທົດລອງຝຶກເວົ້າພາສາລາວ, ຈະຍັງຄົງສືບຕໍ່. ຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການແລະສັງຄົມຈະຖືກເຊື່ອມສານເຂົ້າໃນທຸກຜົນໄດ້ຮັບໄລຍະກາງຂອງແຜນງານ. ກິດຈະກຳເປົ້າໝາຍຈະມີທ່າອ່ຽງໃນການສະແດງໃຫ້ເຫັນເສັ້ນທາງໄປສູ່ລະບົບການສຶກສາທີ່ຮຽນຮ່ວມຫຼາຍຂຶ້ນ. ໃນໄລຍະທີ2, ຈະມີຄວາມເອົາໃຈໃສ່ເພີ່ມຂຶ້ນໃນການເຊື່ອມໂຍງບັນດາກິດຈະກຳກັບຜົນກະທົບໃນລະດັບສູງ.ສິ່ງດັ່ງກ່າວຮຽກຮ້ອງໃຫ້ມີ,a) ຄວາມເຂັ້ມແຂງໃນການຕິດຕາມ ແລະ ປະເມີນຜົນກ່ຽວພັນກັບຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະສັງຄົມ,b) ເຊື່ອມໂຍງບັນດາກິດຈະກຳກັບບັນຫານະໂຍບາຍຂອງສສກ ໃຫ້ແຈ້ງຂຶ້ນ ແລະ ຮັບປະກັນຄວາມສອດຄ່ອງກັບ ສສກ ແລະ ຄູ່ຮ່ວມພັດທະນາອື່ນໆ ແລະ c) ຂົນຂວາຍໂດຍກົງກັບພະນັກງານລະດັບອາວຸໂສ ຂອງ ສສກ ໃນການເຊື່ອມສານວຽກງານຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະ ສັງຄົມ.

ຍຸດທະສາດຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະ ສັງຄົມ ຈະຖືກພັດທະນາຂຶ້ນພາຍໃນ 6 ເດືອນທຳອິດຂອງການເລີ່ມຕົ້ນໄລຍະທີ 2. ຍຸດທະສາດດັ່ງກ່າວຈະອີງໃສ່ແນວທາງຕາມຈຸດປະສົງດັ່ງນີ້:i) ເພື່ອວາງບຸລິມະສິດໃສ່ວຽກງານຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະ ສັງຄົມ ໂດຍການອຳນວຍຄວາມສະດວກມາດຕະການຄວາມເທົ່າທຽມ, ii) ເພື່ອວາງບຸລິມະສິດໃສ່ວຽກງານຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະ ສັງຄົມ ໂດຍການສົ່ງເສີມການອອກສຽງປະກອບສ່ວນ, ສິດທິ ແລະ ພາວະຄວາມເປັນຜູ້ນຳຂອງແມ່ຍິງທີ່ດ້ອຍໂອກາດໃນຫຼາຍມິຕິ, ແລະiii) ເພື່ອວາງບຸລິມະສິດໃສ່ວຽກງານຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະ ສັງຄົມ ໂດຍການສ້າງຄວາມເຂັ້ມແຂງຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະ ສັງຄົມ ແລະ ສ້າງຈິດສຳນຶກກ່ຽວກັບບັນຫາດັ່ງກ່າວໃນສັງຄົມ.

ວຽກງານຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະ ສັງຄົມຈະເປັນວາລະມາດຕະຖານ ໃນກອງປະຊຸມທີ່ກ່ຽວຂ້ອງ. ການລາຍງານຄວບທຽບໃສ່ຍຸດທະສາດຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະ ສັງຄົມ ຂອງແຜນງານ ໂດຍມີຕົວຊີ້ບອກທາງດ້ານປະລິມານ ແລະ ຄຸນນະພາບ ເພື່ອໃຫ້ສາມາດບັນລະຍາຍການປ່ຽນແປງພຶດຕິກຳໄດ້ຢ່າງຈະແຈ້ງໄດ້. ການຈັດຕັ້ງປະຕິບັດຈະມີຄວາມພະຍາຍາມໃນການຈຳກັດບໍ່ໃຫ້ມີຜົນດ້ານລົບ ໂດຍການຈຳກັດຄວາມສ່ຽງທີ່ກ່ຽວພັນກັບຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະ ສັງຄົມ ຕໍ່ຜູ້ທີ່ໄດ້ຮັບຜົນປະໂຫຍດ, ຮັບປະກັນການມີສ່ວນຮ່ວມຂອງຜູ້ຊາຍ ແລະ ເດັກຊາຍ ໃນການສົນທະນາປຶກສາຫາລື ແລະ ກິດຈະກຳກ່ຽວພັນກັບຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະ ສັງຄົມ, ແລະ ມີເປົ້າໝາຍໃນການສ້າງພື້ນທີ່ໃຫ້ແກ່ກຸ່ມຄົນທີ່ດ້ອຍໂອກາດມີພື້ນທີ່ທີ່ປອດໄພ ແລະ ໄດ້ຮັບການສົ່ງເສີມໃນການສົນທະນາໃນສາທາລະນະ. ປະມານ 2% ຂອງງົບປະມານຂອງແຜນງານ (140,000 ດອນລາອົດສະຕຣາລີຕໍ່ປີ) ຈະຖືກຈັດສັນສຳລັບຊ່ຽວຊານ ແລະ ກິດຈະກຳຂອງຄວາມສະເໝີພາບບົດບາດຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນທີ່ມີຄວາມພິການ ແລະ ສັງຄົມ ທີ່ກ່ຽວຂ້ອງ.